ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ມິຖຸນາ 2024

ປີທີ 13

ສະບັບທີ 973

ລາຍສັປະດາ

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນພຶດສະພາ 2024



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນພຶດສະພາ 2024 ໄດ້ດຳເນີນໃນລະຫວ່າງວັນທີ 03-04 ມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດແລະບັນດາທ່ານກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງ ແລະ ກວດກາເນື້ອໃນຮ່າງບົດລາຍງານຂອງລັດຖະບານ ແລະ ພາກສ່ວນຕ່າງໆທີ່ຈະລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງ

ອ່ານຕໍ່ໜ້າ 4

## ສະພາແຫ່ງຊາດ ປິດຊຸດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ II ແລະ ວຽກງານພັກ-ພະນັກງານ

(ສພຊ) - ເມື່ອວັນທີ 31 ພຶດສະພາ 2024 ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີປິດຊຸດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ II ແລະ ວຽກງານພັກ-ພະນັກງານ ຊຸດທີ V ໃຫ້ແກ່ສະມາຊິກພັກ-ພະນັກງານພາຍໃນສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ມີສະຫາຍ ນາງ ປິ່ງຄຳ ລາຊະສິມມາ ກຳມະການການສູນກາງພັກ, ຄະນະບໍລິຫານງານພັກ ສພຊ, ປະທານກຳມາທິ



ການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະຫາຍ ປອ. ດາວ

ອ່ານຕໍ່ໜ້າ 8

## ຍົກສູງຄຸນນະພາບດ້ານເນື້ອໃນ ກອງປະຊຸມສະໄໝສາມັນເທື່ອທີ 7

(ສພຊ) - ລະຫວ່າງວັນທີ 27-31 ພຶດສະພາ 2024 ທີ່ຫໍປະຊຸມແຫ່ງຊາດ, ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານກ່າວເປີດຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ບັນດາທ່ານການນຳຂັ້ນສູງຂອງລັດຖະບານ, ອົງ



ການທີ່ກ່ຽວຂ້ອງ ແລະ ແຂກທີ່ຖືກ

ອ່ານຕໍ່ໜ້າ 4

## ລະດົມຄຳເຫັນເປີດກວ້າງໃສ່ປຶ້ມຄູ່ມືໃນຂົງເຂດ ກຜງສ

(ສພຊ) - ກອງປະຊຸມສຳມະນາລະດົມຄຳເຫັນເປີດກວ້າງໃສ່ປຶ້ມຄູ່ມືໃນຂົງເຂດກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 05-07 ມິຖຸນາ 2024 ໂດຍການເປັນປະທານຂອງທ່ານ ປອ. ລີເບີ ລີບົວປາວ ປະທານ ກຜງສ; ມີບັນດາທ່ານຮອງປະທານກຳມາທິການ ແລະ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ກຳມະການຂອງກຳມາທິການປະຈຳເຂດເລືອກຕັ້ງນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ, ຕາງໜ້າຈາກກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານແຫ່ງ



ສປປລາວ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ຊ່ຽວຊານ, ຜູ້ຂຽນ ແລະ ຄະນະກວດແກ້.

ທັງນີ້, ເພື່ອປຶກສາຫາລືລະດົມຄຳເຫັນເປີດກວ້າງຈາກກຳມະການຂອງກຳມາທິການ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ ເຮັດໃຫ້ປຶ້ມຄູ່ມືໃນຂົງເຂດກຳມາທິການແຜນ

ອ່ານຕໍ່ໜ້າ 8

## ກອງປະຊຸມສະໄໝສາມັນເທື່ອທີ 7 ຈະໄດ້ຈັດຂຶ້ນໃນວັນທີ 10 ມິຖຸນານີ້

(ສພຊ) - ໃນຕອນເຊົ້າຂອງວັນທີ 05 ມິຖຸນາ 2024 ທີ່ສະພາແຫ່ງຊາດ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການຄະນະປະຈຳ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ປະສານສົມທົບກັບລັດຖະບານ, ອົງການໄອຍະການ



ປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ໃນການກະກຽມເນື້ອໃນຂອງແຕ່ລະພາກສ່ວນທີ່ຈະນຳສະເໜີຕໍ່ກອງປະຊຸມໃນຄັ້ງນີ້; ມາເຖິງປັດຈຸບັນ ເຫັນວ່າການກະກຽມແມ່ນຄົບຖ້ວນ, ສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍແລ້ວ.

ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ຈະໄຂຂຶ້ນໃນວັນທີ 10 ມິຖຸນາແລະຈະດຳເນີນໄປເຖິງວັນທີ 02 ກໍ

ອ່ານຕໍ່ໜ້າ 8

## ຮອງລັດຖະມົນຕີກະຊວງການຕ່າງປະເທດເຢຍລະມັນ ເຂົ້າຢ້ຽມຂ່ຳນັບປະທານກຳມາທິການການຕ່າງປະເທດ



(ສພຊ) - ຕອນເຊົ້າວັນທີ 03 ມິຖຸນາ 2024 ທີ່ສະພາແຫ່ງຊາດ, ທ່ານ ໂທບີອັດສ໌ ລິນເນີ (Dr. Tobias Lindner) ຮອງລັດຖະມົນຕີກະຊວງການຕ່າງປະເທດເຢຍລະມັນ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂ່ຳນັບທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໃນໂອກາດທີ່ເດີນທາງມາຢ້ຽມຢາມແລະເຮັດວຽກຢູ່ສປປລາວ.

ໃນການຢ້ຽມຂ່ຳນັບຄັ້ງນີ້, ສອງຝ່າຍໄດ້ສະແດງຄວາມຍິນດີຕໍ່ສາຍພົວພັນມິດຕະພາບທີ່ມີມາແຕ່ດົນນານ ແລະ ການຮ່ວມມືທີ່ມີໝາກຜົນລະຫວ່າງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ກັບ ສາທາລະນະລັດ ສະຫະພັນເຢຍລະມັນ; ໄລຍະຜ່ານມາ ເຢຍລະ

ອ່ານຕໍ່ໜ້າ 3

ເສດຖະກິດ ເອກະລາດ... (ໜ້າ 9)



ວິທີສັງເກດເຫັດເບື່ອ... (ໜ້າ 10)




ລັດຖະສະພາໂກໂລມບີ... (ໜ້າ 11)



ກະກຽມລ່ວງໜ້າ... (ໜ້າ 12)

## ຂ່ຳນັບຮັບຕ້ອນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ຢ່າງສຸດໃຈ!

# ຮອງປະທານ ກຜງສ ຕ້ອນຮັບຫົວໜ້າ ຄະນະປະເມີນເສດຖະກິດມະຫາພາກຂອງ IMF




(ສພຊ) - ໃນຕອນບ່າຍຂອງວັນພຸດທີ 29 ພຶດສະພາ 2024 ທີ່ສະພາແຫ່ງຊາດ, ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນແລະການກວດສອບ (ກຜງສ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ອະລາສແດຣ໌ ສະກ໊ອດ (Alasdair Scott) ຫົວໜ້າຄະນະປະເມີນເສດຖະກິດມະຫາພາກ ຂອງອົງການກອງທຶນການເງິນສາກົນ ຫຼື ໄອເອັມເອັຟ (International Monetary Fund-IMF) ເພື່ອສະຫຼຸບຜົນການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ຕາມພັນທະມາດຕາ IV ຂອງອົງການ IMF (Article IV) ປະຈຳປີ 2024 ແລະໃຫ້ຄຳແນະນຳດ້ານນະໂຍບາຍເບື້ອງຕົ້ນໃນການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຂອງ ສປປ ລາວ.

ທ່ານ ທັນຕາ ກອງຜາລີ ໄດ້ສະແດງຄວາມຍິນດີເປັນຢ່າງຍິ່ງທີ່ໄດ້ຕ້ອນຮັບ ແລະ ຕີລາຄາສູງຕໍ່ການເຂົ້າຢ້ຽມຂໍ່ານັບຂອງທ່ານ ອະລາສແດຣ໌ ສະກ໊ອດ ພ້ອມດ້ວຍຄະນະ ໃນຄັ້ງນີ້ ພ້ອມທັງແຈ້ງໃຫ້ຮູ້ກ່ຽວກັບສະພາບຄວາມເປັນມາ, ຈຸດພິເສດ, ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ແຫ່ງ ສປປ ລາວ ໂດຍສັງເຂບ ແລະ ບັນຫາຕ່າງໆທີ່ທ່ານ ອະລາສແດຣ໌ ສະກ໊ອດ ໃຫ້ຄວາມສົນໃຈ; ສະແດງຄວາມຂອບໃຈຕໍ່ອົງການ IMF ທີ່ໄດ້ໃຫ້ຄຳແນະນຳທີ່ດີຕໍ່ການແກ້ໄຂບັນຫາເສດຖະກິດຂອງ ສປປ ລາວ ແລະ ຫວັງວ່າຈະສືບຕໍ່ໃຫ້ການຊ່ວຍເຫຼືອໃນດ້ານຕ່າງໆໃຫ້ແກ່ ສປປ ລາວ ໃນຕໍ່ໜ້າ.

ທ່ານ ອະລາສແດຣ໌ ສະກ໊ອດ ໄດ້ສະແດງຄວາມຂອບໃຈຕໍ່ທ່ານ ທັນຕາ ກອງຜາລີ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງລາຍງານຜົນການປະເມີນເສດຖະກິດມະຫາພາກ ປະຈຳປີ 2024 ຂອງ ສປປ ລາວ ເຊິ່ງເຫັນໄດ້ວ່າຫຼາຍຂົງເຂດວຽກງານທີ່ຕິດພັນກັບເສດຖະກິດ ແມ່ນໄດ້ຮັບການພັດທະນາໃນລະດັບດີຂຶ້ນເທື່ອລະກ້າວ; ຄຽງຄູ່ກັນນີ້, ກໍຍັງມີສິ່ງທ້າທາຍຫຼາຍດ້ານທີ່ ສປປ ລາວ ຍັງຈະຕ້ອງສືບຕໍ່ຮັບມື ແລະ ປັບປຸງ ເປັນຕົ້ນການປັບປຸງໂຄງສ້າງໜີ້ສິນພາກລັດ, ການບໍລິຫານງົບປະມານ ແລະ ນະໂຍບາຍທາງດ້ານເງິນຕາ ເຊິ່ງອົງການ IMF ກໍໄດ້ອະທິບາຍວ່າ ການມາປະເມີນເສດຖະກິດຄັ້ງນີ້ ແມ່ນເພື່ອວິເຄາະບັນຫາ ແລະ ຊອກຫາວິທີທາງອອກ. ພ້ອມດຽວກັນ, ກໍຍິນດີທີ່ຈະໃຫ້ການຊ່ວຍເຫຼືອທາງດ້ານນະໂຍບາຍ ແລະ ດ້ານວິຊາການ ແກ່ຂະແໜງການເງິນ ແລະ ຂະແໜງການກ່ຽວຂ້ອງຂອງ ສປປ ລາວ ທັງໃນໄລຍະສັ້ນ ແລະ ໄລຍະຍາວ.

**(ສອນສັກ ວັນວິໄຊ)**

# ຕິດຕາມກວດກາການເຮັດທົດລອງຊັບສິນ ດິຈິຕອນ ແລະ ດຳເນີນການຊື້-ຂາຍເງິນຄຣິບໂຕ




(ສພຊ) - ທ່ານ ປອ. ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໄດ້ລົງເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການເຮັດທົດລອງຊັບສິນດິຈິຕອນແລະການທົດລອງດຳເນີນການຊື້-ຂາຍເງິນຄຣິບໂຕ ຢູ່ ສປປ ລາວ ຢູ່ແຂວງວຽງຈັນແລະນະຄອນຫຼວງວຽງຈັນ ລະຫວ່າງວັນທີ 21-25 ພຶດສະພາ 2024.

ທ່ານ ປອ. ເກດແກ້ວ ສີຫາລາດ ພ້ອມດ້ວຍຄະນະ ໄດ້ເຂົ້າພົບທ່ານ ຄຳພັນ ສິດທິດຳພາ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງວຽງຈັນ ເພື່ອແຈ້ງຈຸດປະສົງ ແລະ ລາຍງານກ່ຽວກັບ ພະແນກການທີ່ກ່ຽວຂ້ອງຄື: ເຕັກໂນໂລຊີ ແລະ ການສື່ສານ, ພະລັງງານ ແລະ ບໍ່ແຮ່, ແຜນການ ແລະ ການລົງທຶນ, ແລະ ການເງິນ ເພື່ອຮັບຟັງການລາຍງານການກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການເຮັດທົດລອງຊັບສິນດິຈິຕອນ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ, ຊຸກຍູ້ສິ່ງເສີມ ແລະ ດ້ານອ່ອນຂໍ້ຄົງຄ້າງ ທີ່ຈະຕ້ອງຊອກຫາວິທີການແກ້ໄຂ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ແລະ ເປັນຂໍ້ມູນບ່ອນອີງສັງລວມລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອນຳເຂົ້າຄົ້ນຄວ້າ, ພິຈາລະນາ ແລະ ປະເມີນ ກ່ຽວກັບການເຮັດທົດລອງຊັບສິນດິຈິຕອນແລະການທົດລອງດຳເນີນການຊື້-ຂາຍເງິນຄຣິບໂຕຢູ່ສປປລາວ ໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX.

## ເລື່ອງ ເດັ່ນ ຂ່າວ ເດັດ

*# ຄັດໂດຍ: ທອມສະນິດ*

*❐ ໃນໂອກາດປີທ່ອງທ່ຽວລາວ 2024 ສປປ ລາວ ວາງຄາດໝາຍດຶງດູດນັກທ່ອງທ່ຽວຈີນໃຫ້ໄດ້ບໍ່ຫຼຸດ 8 ແສນກວ່າຄົນ ໃນຈຳນວນຄາດໝາຍດຶງດູດນັກທ່ອງທ່ຽວຕ່າງປະເທດໃຫ້ໄດ້ທັງໝົດ 2,7 ລ້ານຄົນ. ໃນນີ້, ສະເພາະໄລຍະ 3 ເດືອນຕົ້ນປີນີ້ (ເດືອນມັງກອນ-ມີນາ) ມີນັກທ່ອງທ່ຽວຈີນເດີນທາງເຂົ້າມາທ່ອງທ່ຽວລາວ 242.139 ຄົນ, ຈັດຢູ່ອັນດັບທີ 3 ຂອງຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ອງທ່ຽວລາວທັງໝົດ, ໃນປີ 2023 ຜ່ານມາ, ມີນັກທ່ອງທ່ຽວຈີນ ເດີນທາງເຂົ້າມາທ່ອງທ່ຽວລາວທັງໝົດ 641.314 ຄົນ.*

***ໜສພ. ປະຊາຊົນ 27/05/2024***

*❐ ວັນປູກຕົ້ນໄມ້ແຫ່ງຊາດປີນີ້, ລັດຖະບານກໍຄື ກະຊວງກະສິກຳ ແລະ ປ່າໄມ້ ມີແຜນຈະປູກຕົ້ນໄມ້ໃຫ້ໄດ້ 3.500 ເຮັກຕາ ໃນຂອບເຂດທົ່ວປະເທດ ແລະ ກະກຽມເບ້ຍໄມ້ 3.500.000 ກວ່າເບ້ຍ. ໃນນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຈະຈັດພິທີປູກຕົ້ນໄມ້ ເພື່ອສະເຫຼີມສະຫຼອງວັນປູກຕົ້ນແຫ່ງຊາດ 1 ມິຖຸນາ ຢູ່ບ້ານໂພສີ (ກຸ່ມໂພນທອງ) ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ໃນເນື້ອທີ່ປະມານ 5 ເຮັກຕາ.*

***ໜສພ. ປະເທດລາວ 29/05/2024***

*❐ ຜົນໄດ້ຮັບຂອງການຈັດຕັ້ງປະຕິບັດວຽກງານຂອງອົງການອາຫານໂລກ (WFP) ປະຈຳລາວ ຮ່ວມກັບ ລັດຖະບານລາວ ໃນປີ 2023 ຜ່ານມາ ໄດ້ສ້າງຜົນປະໂຫຍດໃຫ້ສັງຄົມລາວ ຜ່ານວຽກງານທີ່ສຸມໃສ່ 4 ເປົ້າໝາຍ ເຊິ່ງໄດ້ລົງທຶນໄປທັງໝົດ 13,7 ລ້ານໂດລາ ໃນການສະໜັບສະໜູນອາຫານທ່ຽງໃນໂຮງຮຽນ, ສົ່ງເສີມດ້ານໂພຊະນາການ, ການປັບຕົວກັບສະພາບອາກາດ ແລະ ການຄຸ້ມຄອງຄວາມສ່ຽງໄພພິບັດ ລວມເຖິງການຕອບໂຕ້ໄພພິບັດສຸກເສີນ. ພ້ອມນັ້ນ, ຍັງໃຫ້ຮູ້ວ່າ: ໃນປີ 2023, ໃນກຸ່ມເດັກນ້ອຍອາຍຸຕ່ຳກວ່າ 5 ປີ ມີ 33% ທີ່ເຕ້ຍກວ່າມາດຕະຖານ, 11% ທີ່ຈ່ອຍຜອມ, 21% ທີ່ມີນ້ຳໜັກຫຼຸດມາດຕະຖານ, 44% ເປັນໂລກເລືອດຈາງ; ພ້ອມດຽວກັນ, ກໍມີພຽງແຕ່ 1 ໃນ 4 ຂອງເດັກນ້ອຍ ທີ່ໄດ້ກິນອາຫານທີ່ຖືກຫຼັກ ແລະ 1 ໃນ 10 ຂອງຄອບຄົວ ແມ່ນມີຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ ເຊິ່ງຄວາມສ່ຽງສູງສຸດ ແມ່ນຢູ່ໃນແຂວງເຊກອງ ມີເຖິງ 27%. ຂະນະທີ່ການປ່ຽນແປງຂອງດິນຟ້າອາກາດ ກໍຍັງເປັນໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ລວມເຖິງບັນຫາເສດຖະກິດທີ່ເປັນຜົນໃຫ້ອັດຕາເງິນເຟີ້ຂອງລາຄາອາຫານເພີ່ມຂຶ້ນ.*

***ໜສພ. ປະຊາຊົນ 29/05/2024***

*❐ ໃນໄລຍະ 5 ປີຜ່ານມາ (2018-2023) ໄອຍະການທະຫານທົ່ວກອງທັບ ໄດ້ປະຕິບັດນະໂຍບາຍດ້ານມະນຸດສະທຳຂອງພັກ-ລັດ ຕໍ່ນັກໂທດໄດ້ຮັບອະໄພຍະໂທດ 67 ຄົນ, ຍິງ 2 ຄົນ. ໃນນີ້, ໄດ້ຮັບອະໄພຍະໂທດ-ຜ່ອນໂທດ 56 ຄົນ, ຍິງ 2 ຄົນ ແລະ ອະໄພຍະໂທດປ່ອຍຕົວ 11 ຄົນ.*

***ໜສພ. ປະເທດລາວ 29/05/2024***

*❐ ບົດລາຍງານອັດຕາເງິນເຟີ້ຂອງສູນສະຖິຕິແຫ່ງຊາດ ກະຊວງແຜນການ ແລະ ການລົງທຶນ ໃຫ້ຮູ້ວ່າ: ອັດຕາເງິນເຟີ້ ຂອງ ສປປລາວ ໃນເດືອນພຶດສະພາ 2024 ຍັງສືບຕໍ່ເໜັງຕີງເພີ່ມສູງຂຶ້ນ ຢູ່ໃນລະດັບ 25,8% (ເດືອນເມສາ 2024 ຢູ່ໃນລະດັບ 24,9%). ໃນນັ້ນ, ໝວດສິນຄ້າທີ່ມີອັດຕາເງິນເຟີ້ສູງກວ່າໝູ່ ແມ່ນໝວດຮັກສາສຸຂະພາບ ແລະ ຢາ ເພີ່ມຂຶ້ນ 38,5%, ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 36,6%, ເຄື່ອງນຸ່ງຫົ່ມ ແລະ ເກີບ ເພີ່ມຂຶ້ນ 31,3%, ໝວດເຫຼົ້າ ແລະ ຢາສູບ ເພີ່ມຂຶ້ນ 29,6% ແລະ ໝວດຄົມມະນາຄົມ ແລະ ການຂົນສົ່ງ ເພີ່ມຂຶ້ນ 27,7%.*

***ໜສພ. ປະຊາຊົນ 04/06/2024***

# ຫາລືແບບທາງໄກກະກຽມເປັນເຈົ້າພາບກອງປະຊຸມ AIPACODD ຄັ້ງທີ 7




(ສພຊ) - ໃນວັນທີ 28 ພຶດສະພາ 2024 ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ອຳໄພ ຈິດມະນີ ຮອງປະທານກຳມາທິການກົດໝາຍ ແລະ ທ່ານ ຈັນທະວົງ ແສນອາມາດ ມົນຕີຮອງປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍກອງເລຂາໄອປາແຫ່ງຊາດລາວ ໄດ້ຈັດກອງປະຊຸມແບບທາງໄກຮ່ວມກັບທ່ານ ນາງ ຊິຕິ ໂລໄຊ ເມຣີຢັນຕີ ດາໂຕ ຫາຈີ ອັບດູຣາມັນເລຂາທິການໃຫຍ່ໄອປາ ພ້ອມດ້ວຍກອງເລຂາໄອປາເພື່ອປຶກສາຫາລືກັນກ່ຽວກັບການກະກຽມຈັດກອງປະຊຸມສະພາທີ່ປຶກສາໄອປາ ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ (AIPACODD) ຄັ້ງທີ 7 ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 06-09 ສິງຫາ 2024 ທີ່ແຂວງຫຼວງພະບາງ.

ໃນກອງປະຊຸມ, ທ່ານເລຂາທິການໃຫຍ່ໄອປາ ໄດ້ນຳສະເໜີກ່ຽວກັບຮູບແບບ ແລະ ກົນໄກການຈັດກອງປະຊຸມ AIPACODD ຫຼັງຈາກນັ້ນ, ຄະນະຜູ້ແທນໄດ້ປຶກສາຫາລືກັນກ່ຽວກັບຂອບແນວຄວາມຄິດ (Concept Note) ຂອງກອງປະຊຸມ AIPACODD ຄັ້ງທີ 7 ພາຍໃຕ້ຫົວຂໍ້: "ການເພີ່ມທະວີບົດບາດຂອງລັດຖະສະພາ ໃນການຮ່ວມມືເພື່ອແກ້ໄຂບັນຫາຢາເສບຕິດ ເຮັດໃຫ້ອາຊຽນປອດຢາເສບຕິດຢ່າງເປັນຮູບປະທຳ" ພ້ອມດຽວກັນນັ້ນ, ກໍໄດ້ປຶກສາຫາລື ແລະ ເປັນເອກະພາບກັນກ່ຽວກັບວາລະການດຳເນີນກອງປະຊຸມ ແລະ ບັນຫາອື່ນໆກ່ຽວກັບການກະກຽມກອງປະຊຸມ AIPACODD ຄັ້ງທີ 7.



## ຮອງລັດຖະມົນຕີ...

(ຕໍ່ຈາກໜ້າ 1)

ມັນ ໄດ້ໃຫ້ການຊ່ວຍເຫຼືອລາວທາງດ້ານການສຶກສາ, ການພັດທະນາໂຄງລ່າງພື້ນຖານ, ການສົ່ງເສີມການຜະລິດຂະໜາດກາງ-ຂະໜາດນ້ອຍ ເຊິ່ງໄດ້ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ສປປ ລາວ ໃຫ້ດີຂຶ້ນ.

ທ່ານປະທານກຳມາທິການການຕ່າງປະເທດ ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງລັດຖະມົນຕີກະຊວງການຕ່າງປະເທດເຢຍລະມັນ ທີ່ໄດ້ຍາດເວລາມາຢ້ຽມຢາມສະພາແຫ່ງຊາດລາວ ເຊິ່ງເປັນການແລກປ່ຽນຄຳຄິດຄຳເຫັນໃນວຽກງານການພົວພັນຮ່ວມມືທາງດ້ານການເມືອງ ເຊິ່ງເຫັນວ່າມີຫຼາຍຄະນະຜູ້ແທນຂອງ ສສ.ເຢຍລະມັນ ໄດ້ມາຢ້ຽມຢາມສປປລາວ ເປັນການແລກປ່ຽນທັດສະນະຮ່ວມກັນຢ່າງສ້າງສັນ; ເພື່ອຊຸກຍູ້ໃຫ້ການຮ່ວມມືໄດ້ມີຜົນປະໂຫຍດໃນດ້ານອື່ນຕື່ມອີກ, ທ່ານປະທານກຳມາທິການການຕ່າງປະເທດ ສະເໜີໃຫ້ສອງຝ່າຍຊຸກຍູ້ວຽກງານການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ ລະຫວ່າງລາວ-ເຢຍລະມັນ ໃຫ້ມີການຂະຫຍາຍຕົວກວ້າງຂຶ້ນຕື່ມ ແລະ ມີຜົນປະໂຫຍດຮ່ວມກັນຂອງສອງປະເທດ. ພ້ອມກັນນີ້, ຍັງໄດ້ແຈ້ງກ່ຽວກັບການຫັນສປປ ລາວ ຈາກປະເທດທີ່ບໍ່ມີທາງອອກສູ່ທະເລ ມາເປັນປະເທດເຊື່ອມຈອດ, ເຊື່ອມໂຍງ ລະຫວ່າງອາຊຽນ ແລະ ພາກພື້ນໃນໂລກ ໂດຍຜ່ານເສັ້ນທາງລົດໄຟລາວ-ຈີນ ເຊິ່ງເປັນການປະກອບສ່ວນໃຫ້ແກ່ການເຊື່ອມໂຍງລະຫວ່າງອາຊຽນ ແລະ ເອີຣົບ ເວົ້າລວມ, ເວົ້າສະເພາະ ລະຫວ່າງລາວ ແລະ ເຢຍລະມັນ.

ທ່ານຮອງລັດຖະມົນຕີກະຊວງການຕ່າງປະເທດເຢຍລະມັນ ກໍໄດ້ແລກປ່ຽນຄຳເຫັນຢ່າງກົງໄປກົງມາ ແລະ ເຫັນດີຄວນໃຫ້ເສີມຂະຫຍາຍການພົວພັນຮ່ວມມືໃນຂົງເຂດອື່ນໆ, ມີການແລກປ່ຽນສິນຄ້າ ແລະ ແລກປ່ຽນຄະນະຜູ້ແທນສະພາການຄ້າຮ່ວມກັນ ເພື່ອຊອກຊ່ອງທາງການຮ່ວມມືທາງການຄ້າ ແລະ ການລົງທຶນ.

# ສຳເລັດກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກົມກວດກາ



(ສພຊ) - ກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມ ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກົມກວດກາ ໄດ້ໄຂຂຶ້ນໃນຕອນບ່າຍຂອງວັນທີ 28 ພຶດສະພາ 2024 ພາຍໃຕ້ການເປັນປະທານຮ່ວມຂອງສະຫາຍ ນາງ ອ້ອມປະຊາ ໄຊຍະກຸມມານ ຮອງເລຂາໜ່ວຍພັກກົມກວດກາ, ສະຫາຍ ເປຄຳ ລໍຄຳສອນ ຮອງເລຂາ ທັງເປັນປະທານກວດກາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ວຽງຈະເລີນ ແກ້ວລັດຕະນະພອນ ເລຂາໜ່ວຍຊາວໜຸ່ມຮາກຖານກົມກວດກາ, ມີຜູ້ແທນສົມບູນເຂົ້າຮ່ວມ 6 ສະຫາຍ ຍິງ 2 ສະຫາຍ ແລະ ແຂກຖືກເຊີນ 16 ສະຫາຍ ຍິງ 5 ສະຫາຍ.

ກອງປະຊຸມໄດ້ເປັນເອກະສັນຮັບຮອງເອົາລາຍງານການເມືອງ ແລະ ສະແດງຄວາມເຫັນດີເຫັນພ້ອມຕໍ່ບົດສະຫຼຸບຕີລາຄາຜົນງານຂອງໜ່ວຍຊາວໜຸ່ມຮາກຖານກົມກວດກາ ທີ່ຍາດມາໄດ້ໃນໄລຍະຜ່ານມາ ເຊິ່ງແມ່ນຜົນງານໃນການນຳພາ-ຊີ້ນຳຂອງຄະນະໜ່ວຍຊາວໜຸ່ມຮາກຖານ ຕໍ່ຂົງເຂດວຽກງານຕ່າງໆຕາມຄວາມຮັບຜິດຊອບ; ພ້ອມກັນນີ້, ກໍເປັນເອກະພາບຕາມທິດທາງລວມ, ຄາດໝາຍສູ້ຊົນ ແລະ ທິດທາງວຽກງານລະອຽດແຕ່ລະດ້ານ ໃນ 5 ປີຕໍ່ໜ້າ. ຮັບຟັງການລາຍງານ ແລະ ຮັບຮອງເອົາບົດສຳຫຼວດການນຳພາຂອງຄະນະໜ່ວຍຊາວໜຸ່ມຮາກຖານກົມກວດກາໃນໄລຍະຜ່ານມາ ເຊິ່ງໄດ້ຕີລາຄາດ້ານດີ, ດ້ານອ່ອນ ຂໍ້ຄົງຄ້າງ ແລະ ບົດຮຽນຖອດຖອນໄດ້ຈຳນວນໜຶ່ງທີ່ຄະນະໜ່ວຍຊາວໜຸ່ມຮາກຖານກົມກວດກາ ຊຸດທີ II ຈະໄດ້ປັບປຸງແກ້ໄຂຂໍ້ບົກຜ່ອງ ແລະ ເສີມຂະຫຍາຍດ້ານຕັ້ງໜ້າຢ່າງແຂງແຮງ.

ຜູ້ແທນສົມບູນ ໄດ້ໃຊ້ສິດປະຊາທິປະໄຕປ່ອນບັດເລືອກເອົາຄະນະໜ່ວຍຊາວໜຸ່ມຮາກຖານກົມກວດກາ ຊຸດໃໝ່ ບົນພື້ນຖານຕາມຫຼັກການລວມສູນປະຊາທິປະໄຕ, ຖືກຕ້ອງຕາມມາດຕະຖານເງື່ອນໄຂທີ່ໄດ້ກຳນົດໄວ້ ເຊິ່ງມີຜູ້ສະໝັກທັງໝົດ 5 ສະຫາຍ ຍິງ 2 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະໜ່ວຍຊາວໜຸ່ມຮາກຖານກົມກວດກາ ຊຸດທີ II ໄດ້ເປັນເອກະພາບເລືອກເອົາສະຫາຍ ວຽງຈະເລີນ ແກ້ວລັດຕະນະພອນ ເປັນເລຂາ, ສະຫາຍ ນາງ ໜູຮັກ ດວງດີ ເປັນຮອງເລຂາ ແລະ ປະທານກວດກາ, ສະຫາຍ ບົກລັດ ເລັດລີວັນ ເປັນກຳມະການ.

ໃນໂອກາດນີ້, ສະຫາຍ ນາງອ້ອມປະຊາ ໄຊຍະກຸມມານ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານທີ່ໜ່ວຍຊາວໜຸ່ມຮາກຖານກົມກວດກາຍາດມາໄດ້ໃນໄລຍະຜ່ານມາ. ພ້ອມນັ້ນ, ກໍໄດ້ເນັ້ນໜັກໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ເອົາໃຈໃສ່ຄົ້ນຄວ້າເຊື່ອມຊຶມຢ່າງເລິກເຊິ່ງຕໍ່ແນວ ທາງວຽກງານມະຫາຊົນຂອງພັກ ແລະ ມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມສະພາແຫ່ງຊາດ ຄັ້ງທີ IV, ຫັນມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກົມກວດກາ ມາເປັນແຜນການ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ, ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກຊາວໜຸ່ມທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນດ້ວຍຫຼາຍຮູບຫຼາຍວິທີ, ມີວິທະຍາສາດ ແລະ ມີເນື້ອໃນທີ່ແທດເໝາະກັບຈຸດພິເສດຂອງຊາວໜຸ່ມ ແນໃສ່ສ້າງໃຫ້ສະມາຊິກຊາວໜຸ່ມມີຄວາມອຸ່ນອຽນ, ໜຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີນ້ຳໃຈຮັກຊາດ, ຮັກປະຊາຊົນ; ສະມາຊິກຊາວໜຸ່ມກົມກວດກາຕ້ອງຕື່ນຕົວຄົ້ນຄວ້າຮ່ຳຮຽນຍົກລະດັບຮອບດ້ານ ເປັນຕົ້ນທິດສະດີການເມືອງ, ວິຊາສະເພາະ, ພາສາຕ່າງປະເທດ, ຄອມພິວເຕີ ແລະ ເຕັກນິກວິທະຍາສາດອື່ນໆ ເພື່ອຕອບສະໜອງໃຫ້ແກ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່; ເອົາໃຈໃສ່ຈັດຕັ້ງຊຸກຍູ້ຂະບວນການຊາວໜຸ່ມໃຫ້ຟົດຟື້ນ ໂດຍຖືເອົາຂໍ້ແຂ່ງຂັນ 4 ບຸກ ຂອງຊາວໜຸ່ມເປັນພື້ນຖານໃນການຈັດຕັ້ງປະຕິບັດ ຕິດພັນກັບການສ້າງຂະບວນການຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ; ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນຖັນແຖວຊາວໜຸ່ມ ໂດຍສະເພາະຕ້ານສະພາບການຫຼິ້ນກິນຟຸມເຟືອຍ ແລະ ພົວພັນກັບສິ່ງເສບຕິດ.

**(ນາງ ອາລິນ ສຸພົມມະປະດິດ)**





## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຊາດ ຊຸດທີ IX ຄື: ບົດລາຍງານຢ່າງສັງລວມຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024 ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ; ບົດລາຍງານຂອງກະຊວງແຜນການ ແລະ ການລົງທຶນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024; ບົດລາຍງານຂອງກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024; ບົດລາຍງານຂອງທະນາຄານ ແຫ່ງ ສປປ ລາວ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024; ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະແຕ່ເດືອນ 7 ປີ 2021 ຫາເດືອນ 4 ປີ 2024 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024; ບົດລາຍງານການຈັດຕັ້ງປະຕິບັດໂຄງການລົງທຶນແຮ່ທາດ ໃນໄລຍະຜ່ານມາ ແລະ ແຜນໃນຕໍ່ໜ້າ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ 2023 ວ່າດ້ວຍການຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດຮອດປີ 2030; ບົດລາຍງານການຈັດຕັ້ງປະຕິບັດບັນດາຄາດໝາຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາແລະທິດທາງແຜນການໃນຕໍ່ໜ້າ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 82/ສພຊ, ລົງວັນທີ 30 ທັນວາ 2022. ນອກຈາກນີ້, ກອງປະຊຸມ ຍັງໄດ້ຮັບຟັງການລາຍງານກ່ຽວກັບການແກ້ໄຂຜົນການກວດສອບປະຈໍາປີ 2022; ບົດລາຍງານກ່ຽວກັບຄວາມຄືບໜ້າການກະກຽມເນື້ອໃນ ແລະ ສະຖານທີ່ຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ແລະ ກອງປະຊຸມ AIPACODD ຄັ້ງທີ 7; ຄວາມພ້ອມກ່ຽວກັບການກະກຽມກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX; ຜົນການກວດກາເນື້ອໃນຮອບດ້ານຮ່າງກົດໝາຍສະບັບປັບປຸງ ຈໍານວນ 4 ສະບັບ ທີ່ຈະນໍາເຂົ້າພິຈາລະນາໃນກອງປະຊຸມດັ່ງກ່າວ ຄື: ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ການພິຈາລະນາໜັງສືສະເໜີຂອງສານປະຊາຊົນສູງສຸດ ກ່ຽວກັບການແຕ່ງຕັ້ງປະທານ, ຮອງປະທານຂອງສານປະຊາຊົນທ້ອງຖິ່ນ; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງນາຍົກລັດຖະມົນຕີ ກ່ຽວກັບການສະເໜີຂໍຫັນປ່ຽນທີ່ດິນປ່າໄມ້ທໍາມະຊາດໄປເປັນທີ່ດິນປະເພດອື່ນ ແລະ ຂໍຍົກເວັ້ນຄ່າທໍານຽມໃນການຫັນປ່ຽນທີ່ດິນປ່າໄມ້ເພື່ອນໍາໃຊ້ເຂົ້າໃນການກໍ່ສ້າງໂຮງຮຽນເຫຼົ່າຮົບແຜນທີ່ຂອງກະຊວງປ້ອງກັນປະເທດຢູ່ເຂດບ້ານປັກແຮດ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ.

ການດໍາເນີນກອງປະຊຸມຄະນະປະຈໍາສະພາແຫ່ງຊາດຄັ້ງນີ້, ບັນດາທ່ານຄະນະປະທານຄະນະປະຈໍາສະພາແຫ່ງຊາດ, ບັນດາທ່ານກໍາມະການຄະນະປະຈໍາສະພາແຫ່ງຊາດ ໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄໍາເຫັນຕໍ່ເນື້ອໃນຂອງບົດລາຍງານ ແລະການສະເໜີຂອງພາກສ່ວນຕ່າງໆ ຢ່າງເລິກເຊິ່ງ ເພື່ອເປັນບ່ອນອີງໃຫ້ບັນດາກະຊວງ, ອົງການ ນໍາໄປຄົ້ນຄວ້າປັບປຸງເຂົ້າໃສ່ເນື້ອໃນຂອງບົດລາຍງານ, ເນື້ອໃນຂອງບັນດາຮ່າງກົດໝາຍ ແລະ ເອກະສານຕ່າງໆ ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ, ມີຜົນສັກສິດໃນການຈັດຕັ້ງປະຕິບັດ.

## ຍົກສູງ...

(ຕໍ່ຈາກໜ້າ 1)

ເຊີນເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນພິທີເປີດກອງປະຊຸມ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມແມ່ນເພື່ອສ້າງເງື່ອນໄຂໃຫ້ແກ່ສະມາຊິກສະພາແຫ່ງຊາດ ໄດ້ຮັບຟັງການລາຍງານ, ການຊີ້ແຈງ-ອະທິບາຍຂອງບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າອົງການຕໍ່ເນື້ອໃນເອກະສານຕ່າງໆທີ່ຈະນໍາເຂົ້າລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອປຶກສາຫາລືແລກປ່ຽນຂໍ້ມູນເຊິ່ງກັນແລະກັນແນໃສ່ເຮັດໃຫ້ຜູ້ແທນກອງປະຊຸມສາມາດກໍາແໜ້ນບັນຫາສໍາຄັນ, ສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງ, ເປັນເອກະພາບທາງດ້ານເນື້ອໃນ ແລະ ທັດສະນະ ເພື່ອຈະເປັນຂໍ້ສະດວກໃຫ້ແກ່ການປະກອບຄໍາເຫັນ, ພິຈາລະນາຮັບຮອງເອກະສານຕ່າງໆຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ບັນລຸໄດ້ຕາມແຜນການທີ່ວາງໄວ້ ແລະ ມີປະສິດທິຜົນນັບມື້ສູງຂຶ້ນ. ທ່ານຮອງປະທານສະພາແຫ່ງຊາດຍັງໄດ້ສະເໜີບັນດາທ່ານສະມາຊິກສະພາແຫ່ງຊາດ, ຄະນະຮັບຜິດຊອບເນື້ອໃນຂົງເຂດລັດຖະບານ, ຄະນະຮັບຜິດຊອບຮ່າງກົດໝາຍ ແລະພາກສ່ວນທີ່ກ່ຽວຂ້ອງ ຈົ່ງເອົາໃຈໃສ່ເຂົ້າຮ່ວມ, ຕິດຕາມຢ່າງຕໍ່ເນື່ອງເປັນປົກກະຕິແລະເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນສຸມສະຕິປັນຍາເຂົ້າໃນການປະກອບຄວາມຄິດເຫັນຢ່າງສ້າງສັນ, ກົງໄປກົງມາ, ຍົກໃຫ້ເຫັນສະພາບການຕົວຈິງ ແລະ ພ້ອມກັນຄົ້ນຄວ້າຊອກຫາວິທີການແກ້ໄຂຕໍ່ບັນຫາຄວາມຫຍຸ້ງຍາກທີ່ເກີດຂຶ້ນໃນປະເທດໃນປັດຈຸບັນ, ສະເໜີຄໍາຄິດຄໍາເຫັນຢ່າງກົງໄປກົງມາ ເພື່ອເຮັດໃຫ້ການຄົ້ນຄວ້າປະກອບຄໍາເຫັນສາມາດຮັບປະກັນ ແລະ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ສອດຄ່ອງກັບສິດແລະໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ຕາມທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນແລະກົດໝາຍ, ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ໃນປັດຈຸບັນ; ທ່ານຍັງໄດ້ສະເໜີກອງເລຂາກອງປະຊຸມ ແລະ ຜູ້ຕິດຕາມກອງປະຊຸມຈາກກະຊວງ, ອົງການ ໃຫ້ເອົາໃຈໃສ່ສັງລວມຄໍາເຫັນ, ຄໍາເຈາະຈີ້ມ ຫຼື ຄໍາຊັກຖາມ ຂອງຜູ້ແທນກອງປະຊຸມເພື່ອເປັນພື້ນຖານໃນການນໍາເອົາຂໍ້ມູນ ແລະ ຄໍາເຫັນຂອງບັນດາທ່ານຕໍ່ການປຶກສາຫາລືຄັ້ງນີ້ນໍາໄປປັບປຸງໃຫ້ເອກະສານຕ່າງໆມີຄວາມສົມບູນກ່ອນນໍາເຂົ້າພິຈາລະນາ, ຮັບຮອງຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX.

ກອງປະຊຸມໄດ້ຮັບຟັງບົດລາຍງານສັງລວມຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ, ການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024; ບົດລາຍງານຂອງກະຊວງແຜນການ ແລະ ການລົງທຶນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024; ບົດລາຍງານຂອງກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024; ບົດລາຍງານຂອງທະນາຄານ ແຫ່ງ ສປປລາວ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024; ບົດລາຍງານຂອງກະຊວງພະລັງງານແລະບໍ່ແຮ່ ກ່ຽວກັບປະສິດທິຜົນໃນການຈັດຕັ້ງປະຕິບັດບັນດາໂຄງການລົງທຶນແຮ່ທາດໃນໄລຍະຜ່ານມາແລະກໍານົດແຜນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ 2023 ວ່າດ້ວຍການຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດຮອດປີ 2030; ບົດລາຍງານຂອງກະຊວງກະສິກໍາ ແລະ ປ່າໄມ້ ກ່ຽວກັບຜົນການຈັດຕັ້ງປະຕິບັດບັນດາຄາດໝາຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະ ບັບເລກທີ 82/ສພຊ, ລົງວັນທີ 30 ທັນວາ 2022. ນອກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການລາຍງານເນື້ອໃນພົ້ນເດັ່ນຂອງຮ່າງກົດໝາຍ 8 ສະບັບ ໃນນີ້: ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍສະຫະກອນ (ສ້າງໃໝ່), ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ປັບປຸງ), ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ປັບປຸງ), ກົດໝາຍວ່າດ້ວຍສະພາແຫ່ງຊາດ (ປັບປຸງ), ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ປັບປຸງ), ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ປັບປຸງ) ແລະ ກົດໝາຍວ່າດ້ວຍການທ່ອງທ່ຽວ (ປັບປຸງ).

ໃນໄລຍະດໍາເນີນກອງປະຊຸມ, ບັນດາທ່ານ ສສຊ ໄດ້ຄົ້ນຄວ້າປະກອບຄໍາເຫັນຢ່າງກົງໄປກົງມາ, ສ້າງສັນ ຕໍ່ບັນດາບົດລາຍງານຂອງລັດຖະບານ, ຮ່າງກົດໝາຍຈໍານວນ 8 ສະບັບ ໂດຍຍົກໃຫ້ເຫັນຈຸດດີ, ຂໍ້ຄົງຄ້າງ, ການແລກປ່ຽນບົດຮຽນຕົວຈິງມາປຽບທຽບ ແລະ ບັນຫາທີ່ຈະພ້ອມກັນສູ້ຊົນປັບປຸງໃຫ້ດີຂຶ້ນໃນຕໍ່ໜ້າ ເພື່ອພ້ອມກັນຊອກຫາວິທີການແກ້ໄຂ ແລະສ້າງຄວາມເປັນເອກະພາບຕໍ່ເນື້ອໃນຕ່າງໆ ເພື່ອເປັນຂໍ້ມູນໃຫ້ບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ນໍາໄປຄົ້ນຄວ້າ, ປັບປຸງເຂົ້າໃສ່ເນື້ອໃນບົດລາຍງານ ແລະ ບັນດາຮ່າງກົດໝາຍ ໃຫ້ມີຄວາມອຸດົມສົມບູນ, ຮັດກຸມ ກ່ອນຈະນໍາເຂົ້າພິຈາລະນາແລະຮັບຮອງຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX.

ທ່ານຄໍາໃບ ດໍາລັດຮອງປະທານສະພາແຫ່ງຊາດ ໄດ້ມີຄໍາເຫັນກ່າວປິດກອງປະຊຸມວ່າ: ບັນດາເນື້ອໃນທີ່ນໍາມາຄົ້ນຄວ້າ, ປະກອບຄໍາເຫັນຄັ້ງນີ້ເຫັນວ່າບັນດາຜູ້ເຂົ້າຮ່ວມມີຄວາມເຂົ້າໃຈ, ເອກະພາບຫຼາຍບັນຫາພ້ອມທັງໄດ້ຮັບການຊີ້ແຈງຢ່າງລະອຽດດີສົມຄວນ; ບັນດາທ່ານສະມາຊິກສະພາແຫ່ງຊາດ ປະກອບຄໍາເຫັນລົງເລິກຕໍ່ເນື້ອໃນຕ່າງໆຢ່າງກົງໄປກົງມາ ເພື່ອເປັນຂໍ້ມູນໃຫ້ແກ່ພາກສ່ວນກ່ຽວຂ້ອງນໍາໄປປັບປຸງເພີ່ມຕື່ມ ແລະ ສ້າງຄວາມເປັນເອກະພາບ, ຮັບປະກັນໃຫ້ເນື້ອໃນສາມາດນໍາເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ມີຄຸນນະພາບ ແລະ ໄດ້ຮັບຜົນສໍາເລັດຕາມແຜນການທີ່ວາງໄວ້. ທ່ານເນັ້ນໜັກວ່າ ຜົນສໍາເລັດຂອງກອງປະຊຸມຄັ້ງນີ້ ເປັນພຽງບາດກ້າວໜຶ່ງເຊິ່ງພວກເຮົາຈະຕ້ອງໄດ້ເອົາໃຈໃສ່ໃນການຄົ້ນຄວ້າ, ຊອກຫາສາເຫດ, ວິທີການແກ້ໄຂບັນຫາຕ່າງໆ ໃຫ້ມີປະສິດທິຜົນ ເນື່ອງຈາກໃນໄລຍະຜ່ານມາກໍຄືປັດຈຸບັນ ປະເທດພວກເຮົາຍັງຈະສືບຕໍ່ພົບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ສິ່ງທ້າທາຍຫຼາຍປະການທີ່ສົ່ງຜົນຕໍ່ການພັດທະນາຂອງປະເທດ, ຕໍ່ຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ ແລະ ປະຊາຊົນໃນຂອບເຂດທົ່ວປະເທດ ຈຶ່ງຮຽກຮ້ອງມາຍັງບັນດາກະຊວງ-ອົງການ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງພ້ອມກັນເອົາໃຈໃສ່ສືບຕໍ່ປັບປຸງບັນດາເນື້ອໃນຕາມການປະກອບຄໍາເຫັນຂອງບັນດາສະມາຊິກສະພາແຫ່ງຊາດໃຫ້ສໍາເລັດ ເພື່ອຮັບປະກັນໃຫ້ແກ່ການພິຈາລະນາ ແລະ ຮັບຮອງເອົາບັນຫາສໍາຄັນຕ່າງໆທີ່ຈະນໍາເຂົ້າຜ່ານໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໂດຍສະເພາະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ແລະ ກົດໝາຍຈໍານວນໜຶ່ງ.



**(ນາງ ອາລິນ ສຸພົມມະປະດິດ)**



# ກວດກາການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ທີ່ເມືອງທ່າໂທມ



(ສພຊ) - ໃນລະຫວ່າງ ວັນທີ 20-21 ພຶດສະພາ 2024 ທ່ານ ພັອ. ວິໄຊທ໌ ເພຍຫຼວງຈິ່ງເສີ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ, ຮອງປະທານສະພາປະຊາຊົນແຂວງໄຊສົມບູນພ້ອມດ້ວຍທີມງານ ໄດ້ເຄື່ອນໄຫວເຮັດວຽກຮ່ວມກັບອົງການປົກຄອງເມືອງທ່າໂທມ ໂດຍການຕ້ອນຮັບຂອງທ່ານ ຄຳເຜີຍ ແສງສະຫວ່າງ ຮອງເຈົ້າເມືອງ ທັງເປັນສະມາຊິກສະພາປະຊາຊົນແຂວງ ປະຈຳເລືອກຕັ້ງເມືອງທ່າໂທມ ພ້ອມດ້ວຍຄະນະພັກ, ຄະນະນຳອ້ອມຂ້າງເມືອງ.

ໃນກອງປະຊຸມພົບປະ, ທ່ານ ພັອ. ວິໄຊທ໌ ເພຍຫຼວງຈິ່ງເສີ ໄດ້ໃຫ້ຮູ້ວ່າ: ການມາເຄື່ອນໄຫວໃນຄັ້ງນີ້ແມ່ນການລົງຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2024 ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ18ເພື່ອນຳເອົາຂໍ້ມູນແລ້ວລາຍງານຕໍ່ຂັ້ນເທິງເພື່ອເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄດ້ຈັດຂຶ້ນໃນເດືອນມິຖຸນານີ້.

ໂອກາດດຽວກັນນີ້,ທ່ານ ຄຳເຜີຍ ແສງສະຫວ່າງ ໄດ້ລາຍງານການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງທ່າໂທມ 6 ເດືອນຕົ້ນປີ 2024 ເຊິ່ງສະແດງໃຫ້ເຫັນວ່າ: ເມືອງທ່າໂທມເປັນເມືອງໜຶ່ງຂອງແຂວງໄຊສົມບູນທີ່ອຸດົມສົມບູນ ເພາະມີເສັ້ນທາງຜ່ານໄປແຂວງຊຽງຂວາງ ແລະ ມາແຂວງບໍລິຄຳໄຊ ມີການພັດທະນາທາງດ້ານເສດຖະກິດ-ສັງຄົມ ຢ່າງບໍ່ຢຸດຢັ້ງແລະມີນັກລົງທຶນຫຼາຍໆໂຄງການມາລົງທຶນພາຍໃນເມືອງເຮັດໃຫ້ປະຊາຊົນບັນດາເຜົ່າ ໃນເຂດເມືອງທ່າໂທມ ມີລາຍຮັບເຂົ້າສູ່ຄອບຄົວດີພໍສົມຄວນ, ພາຍໃນເມືອງມີຄວາມສະຫງົບ, ເສັ້ນທາງມີຄວາມສະດວກ, ມີເຮືອນພັກ, ຮ້ານອາຫານ ແລະ ປະຊາຊົນບັນດາເຜົ່າສ່ວນຫຼາຍມີການປູກຝັງ-ລ້ຽງສັດເປັນອາຊີບຕົ້ນຕໍ.

ນອກນັ້ນ, ຄະນະຍັງໄດ້ລົງຕິດຕາມກວດກາ-ຊຸກຍູ້ໂຄງການລົງທຶນ ຈຳນວນ 2 ໂຄງການຄື: ໂຄງການສ້ອມແປງຊົນລະປະທານນ້ຳປັງ ທີ່ບ້ານນາທ້ອງ ແລະໂຄງການກໍ່ສ້າງແລະສ້ອມແປງຊົນລະປະທານນ້ຳຊັນ ທີ່ບ້ານຊຽງຄຽງ ໂດຍມີຄະນະຕິດຕາມກວດກາ, ເຈົ້າຂອງໂຄງການ ແລະ ບໍລິສັດຜູ້ຮັບເໝົາກໍ່ສ້າງເຂົ້າຮ່ວມ.

**(ນາງ ອຳໄພພອນ ແກ້ວວິໄລ)**

# ປະທານ ສພຂ ສະຫວັນນະເຂດ ເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍ



(ສພຂ) ໃນລະຫວ່າງ ວັນທີ20-24 ພຶດສະພາ 2024 ທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງສະຫວັນນະເຂດແລະທ່ານພູທອນ ພູດທະຂັນຕີ ເລຂາທິການສະພາປະຊາຊົນແຂວງ, ຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍສະພາປະຊາຊົນແຂວງແລະກົດໝາຍວ່າດ້ວຍການແກ້ຄຳຮ້ອງທຸກ ຢູ່ເມືອງໄຊພູທອງ, ເມືອງສອງຄອນ ແລະ ນະຄອນໄກສອນພົມວິຫານ ໂດຍໄດ້ຮັບການຕ້ອນຮັບຈາກບັນດາທ່ານເຈົ້າເມືອງ ແລະ ຮອງເຈົ້າເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ບັນດາທ່ານກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດອຳນາດການປົກຄອງບ້ານ ໃນເທສະບານເມືອງ ເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ການເຄື່ອນໄຫວຄັ້ງນີ້ ແມ່ນໄດ້ນຳເອົາກົດໝາຍ 2 ສະບັບຄື: ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແມ່ນເປັນກົດໝາຍທີ່ທຸກຄົນຄວນໄດ້ຮັບຮູ້ກ່ຽວກັບສິດ ແລະ ໜ້າທີ່ ເປັນຕົ້ນແມ່ນສິດ ແລະ ໜ້າທີ່ ດ້ານນິຕິກຳ, ສິດ ແລະ ໜ້າທີ່ ດ້ານການພິຈາລະນາບັນຫາສຳຄັນພື້ນຖານ, ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ ແລະ ກົດໝາຍວ່າດ້ວຍຄຳຮ້ອງທຸກ ແມ່ນມີຄວາມໝາຍສຳຄັນ ແລະ ຈຳເປັນ ທີ່ຕິດພັນກັບການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງໃນປັດຈຸບັນຂອງອົງການປົກຄອງເມືອງ ຕະຫຼອດຮອດກຸ່ມບ້ານ ແລະ ບ້ານ ໂດຍສະເພາະການແນະນຳໃຫ້ປະຊາຊົນເຂົ້າໃຈຂັ້ນຕອນໃນການປະກອບເອກະສານ ເປັນຕົ້ນແມ່ນ ຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳ ເຊິ່ງເອກະສານທັງ 3 ຢ່າງນີ້ແມ່ນມີຄວາມໝາຍແຕກຕ່າງກັນ ເຊິ່ງໄດ້ຈຳແນກ ແລະ ຊີ້ແຈງໃຫ້ຜູ້ເຂົ້າຮ່ວມກອງປະຊຸມຢ່າງລະອຽດຖີ່ຖ້ວນ ເພື່ອຍົກລະດັບຄວາມຮູ້, ຄວາມເຂົ້າໃຈກ່ຽວກັບເນື້ອໃນຂອງກົດໝາຍໂດຍສະເພາະຜູ້ທີ່ເຄີຍຜ່ານການຮຽນກົດໝາຍມາແລ້ວ ກໍຍິ່ງເປັນການເພີ່ມທະວີຄວາມຮູ້ທາງດ້ານກົດໝາຍໃຫ້ເລິກເຊິ່ງແລະໜັກແໜ້ນຂຶ້ນຕື່ມ; ຄວາມເປັນເອກະພາບຕໍ່ເນື້ອໃນກົດໝາຍເຫຼົ່ານັ້ນ ແລ້ວນຳໄປຈັດຕັ້ງປະຕິບັດໃຫ້ເຂົ້າສູ່ຊີວິດຕົວຈິງໃນສັງຄົມໃຫ້ກວ້າງຂວາງ ແລະ ເລິກເຊິ່ງຂຶ້ນເທື່ອລະກ້າວ.

ພາຍຫຼັງສຳເລັດການເຜີຍແຜ່ທັງ 2 ກົດໝາຍແລ້ວ ປະທານກອງປະຊຸມຍັງໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມກອງປະຊຸມສົນທະນາ ແລະ ແລກປ່ຽນຄຳຄິດຄຳເຫັນ ໂດຍສະເພາະບັນຫາທີ່ເກີດຂຶ້ນໃນການຈັດຕັ້ງປະຕິບັດລະບຽບກົດໝາຍທີ່ຜ່ານມາຂອງທ້ອງຖິ່ນ, ຕໍ່ຈາກນັ້ນວິທະຍາກອນກໍໄດ້ຊີ້ແຈງຕໍ່ກັບບັນຫາທີ່ຜູ້ເຂົ້າຮ່ວມກອງປະຊຸມສະເໜີ ແລະ ແລກປ່ຽນ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ສະຫຼຸບຕີລາຄາ ພ້ອມທັງມີທິດຊີ້ນຳໃນການຈະຕ້ອງໄດ້ສືບຕໍ່ຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມໃນຄັ້ງນີ້ໃຫ້ກວ້າງຂວາງ, ເລິກເຊິ່ງຂຶ້ນຕື່ມ ດ້ວຍການສືບຕໍ່ລົງໂຄສະນາເຜີຍແຜ່ບັນດາເນື້ອໃນຈິດໃຈຂອງກົດໝາຍເຫຼົ່ານີ້ເຂົ້າສູ່ລົງເລິກໃນການຈັດຕັ້ງປະຕິບັດວຽກງານຕົວຈິງຕາມຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ.

# ສພຂ ສະຫວັນນະເຂດ ສຳເລັດການທາບທາມກົດໝາຍທີ່ຈະນຳເຂົ້າພິຈາລະນາ ໃນກອງປະຊຸມສະໄໝສາມັນເທື່ອທີ 7




(ສພຂ) - ໂດຍສືບຕໍ່ປະຕິບັດຕາມຄຳແນະນຳຂອງກຳມາທິການກົດໝາຍ ສະພາແຫ່ງຊາດ ກ່ຽວກັບໃຫ້ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງໃນຂອບເຂດທົ່ວປະເທດ ຈັດຕັ້ງການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 10 ສະບັບ ກ່ອນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໃນເດືອນມິຖຸນາ ທີ່ຈະເຖິງນີ້; ໃນວັນທີ 23 ພຶດສະພາ 2024 ທີ່ສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ 5 ສະບັບ ຄັ້ງທີ II ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13, ປະທານສະພາປະຊາຊົນແຂວງສະຫວັນນະເຂດ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການສະພາປະຊາຊົນແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ອົງການຈັດຕັ້ງມະຫາຊົນ, ຜູ້ຕາງໜ້າຈາກພະແນກການອ້ອມຂ້າງແຂວງ ທີ່ກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້, ກໍເພື່ອເປັນການສືບຕໍ່ການທາບທາມຄຳເຫັນໃສ່ຮ່າງກົດໝາຍ ທີ່ຍັງຄ້າງ 5 ສະບັບ ໃຫ້ສຳເລັດ, ມີການລະດົມຄຳຄິດເຫັນເປັນເອກະພາບຢ່າງກວ້າງຂວາງ, ເປັນປະໂຫຍດດ້ວຍເຫດ ແລະ ຜົນໃນການສ້າງ ແລະ ປັບປຸງ ສາມາດເຮັດໃຫ້ຮ່າງກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນປັດຈຸບັນເຮັດໃຫ້ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍມີຜົນສັກສິດ ແລະ ດັດປັບສາຍພົວພັນໃນສັງຄົມໃຫ້ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ເຊິ່ງໃນທີ່ປະຊຸມຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີຮ່າງກົດໝາຍ 5 ສະບັບ ປະກອບມີ: ຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອັກຄີໄພ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ); ຈາກນັ້ນ, ຜູ້ແທນທີ່ເຂົ້າຮ່ວມໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາ ຄົ້ນຄວ້າແລກປ່ຽນແລະປະກອບຄຳຄິດຄຳເຫັນຕໍ່ເນື້ອໃນແຕ່ລະໝວດແຕ່ລະມາດຕາຂອງຮ່າງກົດໝາຍດັ່ງກ່າວຢ່າງມີຈຸດສຸມ ແລະ ເປັນຂະບວນຢ່າງຟົດຟື້ນ.



ໃນຕອນທ້າຍ, ປະທານກອງປະຊຸມໄດ້ສະແດງຄວາມຊົມເຊີຍຕໍ່ບັນດາທ່ານເຂົ້າຮ່ວມທີ່ໄດ້ສຸມສະຕິປັນຍາ ພ້ອມທັງເປັນເຈົ້າການຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບັນດາເນື້ອໃນຮ່າງກົດໝາຍຢ່າງມີຈຸດສຸດດ້ວຍລັກສະນະສ້າງສັນ, ຢ່າງຖີ່ຖ້ວນ ແລະ ເລິກເຊິ່ງ ດ້ວຍຄວາມຮັບຜິດຊອບສູງ ອັນເປັນປະໂຫຍດໃນການສ້າງແລະປັບປຸງແກ້ໄຂຮ່າງກົດໝາຍທັງ 5 ສະບັບນີ້ ເຊິ່ງຈະນຳເອົາເນື້ອໃນ, ຈິດໃຈພ້ອມທັງຄຳສະເໜີຕ່າງໆທີ່ແຕ່ລະພາກສ່ວນໄດ້ສະເໜີມານັ້ນ ນຳໄປສັງລວມ ແລະ ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ກໍຄືປະທານກຳມາທິການກົດໝາຍ ຊາບຕໍ່ຜົນການທາບທາມຮ່າງກົດໝາຍໃນຄັ້ງນີ້ຕື່ມອີກ.

# ຄສຜງ ສປນວ ຕິດຕາມກວດກາ ແລະ ຊຸກຍູ້ ວຽກງານຂົວເຂດໂຍທາທິການ ແລະ ຂົນສົ່ງ




(ສພຊ)-ເພື່ອເປັນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຕາມມະຕິທີ່ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ໄດ້ຮັບຮອງເອົາໃນກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງ ສປນວ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນການ 6 ເດືອນຕົ້ນປີ, ແຜນວຽກຈຸດສຸມ 6 ເດືອນທ້າຍປີ 2024; ໃນວັນທີ 27 ພຶດສະພາ 2024 ທ່ານ ສົມບັດ ຈັນທະມາດ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ (ຄສຜງ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ຢູ່ພະແນກໂຍທາທິການ ແລະ ຂົນສົ່ງ (ຍທຂ) ນວ ໂດຍການຕ້ອນຮັບຂອງ ທ່ານ ບຸນຍະວັດ ນິລະໄຊຍ໌ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນວ.

ໂອກາດດັ່ງກ່າວ, ຄະນະໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານໃນໄລຍະ 6 ເດືອນຕົ້ນປີ, ແຜນວຽກຈຸດສຸມ 6 ເດືອນທ້າຍປີ 2024 ເຊິ່ງພະແນກ ຍທຂ ນວ ໄດ້ເອົາໃຈໃສ່ຕິດຕາມກວດກາການເຄື່ອນໄຫວຮອບດ້ານຂອງບັນດາຂະແໜງການ ເປັນຕົ້ນແມ່ນດ້ານວຽກງານຂົວທາງ ໄດ້ສ້ອມແປງ ແລະ ບູລະນະຮັກສາເສັ້ນທາງໃນຕົວເມືອງດ້ວຍການຕາບຂຸມຮັງໄກ່ມີເນື້ອທີ່ທັງໝົດ 451 ມ², ຖົມຂຸມໃຫຍ່ ຈຳນວນ 30 ມ³, ຕິດຕັ້ງຝາຂຸມພັກນ້ຳ (Manhole) ຈຳນວນ 3 ອັນແລະຕິດຕັ້ງຝາເບຕົງຮ່ອງນ້ຳ ຈຳນວນ 14 ອັນ; ສ້ອມແປງເສັ້ນທາງຫຼວງແຫ່ງຊາດ ຈຳນວນ 5 ເສັ້ນທາງ ຄື: ທາງເລກທີ 13 ເໜືອ, ເລກທີ 13 ໃຕ້, ທາງເລກ 10, ທາງເລກ 11 ເໜືອ ແລະ ທາງ 450 ປີ (ໄຟແດງ ດົງໂດກ-ທ່ານາແລ້ງ) ມີລວງຍາວທັງໝົດ 185,7 ກິໂລແມັດ, ມູນຄ່າ 33,50 ຕື້ກີບ, ຮອດປັດຈຸບັນ ປະຕິໄດ້ສຳເລັດໂດຍພື້ນຖານ ສຳລັບເສັ້ນທາງເລກທີ 13 ເໜືອ ຊ່ວງສາມແຍກສີໄຄ-ສີເກີດ ລວງຍາວ 6 ກມ ປັດຈຸບັນພວມດຳເນີນການກໍ່ສ້າງຄວາມຄືບໜ້າໄດ້ປະມານ 36%. ວຽກງານເຄຫາ-ຜັງເມືອງ, ນ້ຳປະປາ ແລະ ສຸຂາພິບານ ໄດ້ປັບປຸງແຜນຜັງລວມເທດສະບານ 3 ເມືອງ ຄື: ເມືອງຫາດຊາຍຟອງ, ເມືອງນາຊາຍທອງ ແລະ ເມືອງປາກງື່ມ ຄວາມຄືບໜ້າ 35%, ລົງຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຊານເມືອງໄດ້ 6 ເມືອງມີ 356 ກໍລະນີ, ແກ້ໄຂການບຸກລຸກຖົມດິນໂດຍບໍ່ໄດ້ຮັບອະນຸຍາດ 56 ກໍລະນີ ແກ້ໄຂການຮ້ອງຟ້ອງຂອງພໍ່ແມ່ປະຊາຊົນກ່ຽວກັບການປຸກສ້າງທີ່ມີຜົນກະທົບກັບຜູ້ຂ້າງຄຽງ ຈຳນວນ 32 ກໍລະນີ, ເກັບກຳຂໍ້ມູນປ້າຍໂຄສະນາ ທີ່ບໍ່ຖືກຕ້ອງຕາມລະບຽບມີ ຈຳນວນ 55 ປ້າຍ ແລະ ເທີບເງິບ ຈຳນວນ 177 ກໍລະນີ; ສຳເລັດການສຶກສາຄວາມເປັນໄປໄດ້ວຽກງານນ້ຳປະປາຢູ່ເຂດເມືອງໃໝ່ ( ເຂດບ້ານນາໂງ່ມ, ນາຕານ ແລະ ກຸ່ມບ້ານຊ້າງ ກວມເອົາ 11 ບ້ານ) ແລະ ສຳເລັດການສຳຫຼວດ-ອອກແບບເບື້ອງຕົ້ນ ແລະ ປະເມີນມູນຄ່າການກໍ່ສ້າງ ໂຄງການຂະຫຍາຍລະບົບນ້ຳປະປາຈາກເຂດບ້ານໂຄກແຫ້ໄປສູ່ເຂດເທດສະບານເມືອງສັງທອງ ນວ; ວຽກງານທາງນ້ຳ ກຳລັງຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນຈຳນວນ 6 ໂຄງການ ຄື: ໂຄງການປ້ອງກັນຕະຝັ່ງເຈື່ອນບ້ານຫ້ວຍຫາງ ເມືອງສັງທອງ ຍາວ 1.760 ແມັດ, ມາຮອດປັດຈຸບັນນີ້ສຳເລັດ 100%; ໂຄງການປ້ອງກັນຕະຝັ່ງເຈື່ອນບ້ານຫ້ອມ ເມືອງຫາດຊາຍຟອງ ຍາວ 1.540 ແມັດ, ສຳເລັດ 76,7%; ໂຄງການປ້ອງກັນຕະຝັ່ງເຈື່ອນດອນຊິງຊູ້ ລວງຍາວ 5.568 ແມັດ, ສຳເລັດ 85,63%; ໂຄງການປ້ອງກັນຕະຝັ່ງເຈື່ອນ ບ້ານໄຮ່ ເມືອງປາກງື່ມ ຍາວ 150 ແມັດ, ສຳເລັດ 35%; ໂຄງການປ້ອງກັນຕະຝັ່ງເຈື່ອນ ບ້ານດອນວັງໂພ ເມືອງປາກງື່ມ 300 ແມັດ, ສຳເລັດ 35%; ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ແລະ ພັດທະນາແຄມຂອງ ໄລຍະ II ແຕ່ຫຼັກ 3 ຫາ ຫາດດອກແກ້ວ ລວງຍາວ 9.6 ກມ, ສຳເລັດ 46,3%.

ວຽກງານຂົນສົ່ງ ແລະ ຄຸ້ມຄອງພາຫະນະ ໄດ້ປັບປຸງເສັ້ນແບ່ງຊ່ອງຈາລະຈອນ ແລະ ຕິດຕັ້ງປ້າຍຈຳນວນໜຶ່ງຕາມເສັ້ນທາງທີ່ສຳຄັນໃນຕົວເມືອງເພື່ອກະກຽມຮັບໃຊ້ກອງປະຊຸມອາຊຽນ ຈຳນວນ 5 ເສັ້ນທາງ; ວຽກຄຸ້ມຄອງການຂົນສົ່ງໂດຍສານ-ສິນຄ້າ. ໃນໄລຍະສາມເດືອນຕົ້ນປີຜ່ານມາ ຂົນສົ່ງໂດຍສານໄດ້ 4.375.000 ເທື່ອຄົນ, ຂົນສົ່ງສິນຄ້າໄດ້ 200.000 ໂຕນ ອອກໃບອະນຸຍາດແລ່ນລົດ 9.023 ຄັນ, ອອກປຶ້ມຜ່ານແດນໃໝ່ 4.369 ຫົວ, ຕໍ່ປຶ້ມຜ່ານແດນ 890 ຫົວ, ມີພາຫະນະມາຂຶ້ນທະບຽນໃໝ່ 4.700 ຄັນ ຍົກຍ້າຍເຂົ້າ-ອອກ ຕ່າງແຂວງ 1.716 ຄັນ, ສອບເສັງໃບຂັບຂີ່ 2.065 ໃບ, ກວດກາເຕັກນິກລົດໄດ້ 26.833 ຄັນ.

ໃນໂອກາດດັ່ງກ່າວ, ຄະນະລົງເຮັດວຽກ ໄດ້ມີຄຳຖາມເຈາະຈີ້ມ ແລະ ມີຄຳເຫັນແລກປ່ຽນຕໍ່ການລາຍງານຂອງທ່ານຫົວໜ້າພະແນກຍທຂ ນວ ເປັນຕົ້ນແມ່ນການກະກຽມຄວາມພ້ອມດ້ານວຽກງານຕ່າງໆ ໃນການເປັນເຈົ້າພາບກອງປະຊຸມອາຊຽນ, ບັນຫາທາງສຽງຂອງປະຊາຊົນ ແລະ ຄຳສະເໜີຂອງປະຊາຊົນ ຕໍ່ຂົງເຂດວຽກງານ ຍທຂ; ພ້ອມດຽວກັນນີ້, ຄະນະລົງເຮັດວຽກກໍໄດ້ຮັບເອົາບາງບັນຫາ, ຂໍ້ຫຍຸ້ງຍາກຂອງພະແນກການ ເພື່ອນຳສະເໜີຕໍ່ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ ແລະ ຕອນທ້າຍຂອງກອງປະຊຸມ, ທ່ານ ສົມບັດ ຈັນທະມາດ ກໍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ພະແນກການ ທີ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຫ້າວຫັນ ແລະ ໃຫ້ສືບຕໍ່ເອົາໃຈໃສ່ປະຕິບັດບັນດາຄາດໝາຍ, ທິດທາງໃນຕໍ່ໜ້າທີ່ກຳນົດໄວ້ໃຫ້ບັນລຸຄາດໝາຍ.

# ກອງປະຊຸມຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍ 5 ສະບັບ

(ສພຊ) - ໃນວັນທີ 28 ພຶດສະພາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດກອງປະຊຸມຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ກົດໝາຍ 5 ສະບັບຄື: ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ກົດໝາຍວ່າດ້ວຍການທ່ອງທ່ຽວ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ໂດຍການເປັນປະທານຂອງທ່ານ ທຸມເພັງ ຈອມວິສານ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ບັນດາຫົວໜ້າ-ຮອງຫົວໜ້າພະແນກການ, ອົງການຂັ້ນແຂວງ ທີ່ກ່ຽວຂ້ອງ, ບັນດາທະນາຄານ ສາຂາແຂວງຜົ້ງສາລີ ແລະ ພະນັກງານ-ວິຊາການ ທີ່ກ່ຽວຂ້ອງຂອງ ສພຂ ເຂົ້າຮ່ວມ.




ທັງນີ້, ກໍເພື່ອເປັນການທາບທາມ, ລະດົມສະຕິປັນຍາ, ຄຳຄິດຄຳເຫັນ ຂອງສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນແຂວງ (ສສຂ) ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືບັນດາເປົ້າໝາຍພາກສ່ວນກ່ຽວຂ້ອງຕ່າງໆຂອງທ້ອງຖິ່ນ ເພື່ອເຮັດໃຫ້ກົດໝາຍ 5 ສະບັບ ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ແທດເໝາະກັບສະພາບຕົວຈິງກ່ອນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງເອົາໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX.

ໃນກອງປະຊຸມໄດ້ຮັບຟັງການລາຍງານຜົນການຄົ້ນຄວ້າ ແລະ ປະກອບຄຳຄິດເຫັນຈາກພະແນກການ, ອົງການທີ່ກ່ຽວຂ້ອງຄື: ພະແນກການເງິນແຂວງ, ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາ ເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງແຕ່ລະກົດໝາຍ ຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ ຢ່າງມີຈຸດສຸມ ແລະ ກົງໄປກົງມາ ເຊິ່ງຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບ ນຳໄປຄົ້ນຄວ້າ, ວິເຄາະວິໄຈປັບປຸງກົດໝາຍແຕ່ລະສະບັບ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຕາມພາລະບົດບາດສິດ ແລະ ໜ້າທີ່ຂອງສະມາຊິກສະພາໃນໄລຍະໃໝ່ສາມາດຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງກວ່າເກົ່າແນໃສ່ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ມີຄວາມສັກສິດສູງຂຶ້ນ.

**(ສູນທອງ)**

# ຮອງປະທານ ຄສຜງ ສປນວ ຕິດຕາມກວດກາ ແລະ ຊຸກຍູ້ວຽກງານຄຸ້ມຄອງພາຫະນະ ແລະ ການຂັບຂີ່



(ສພຊ)-ເພື່ອເປັນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024 ແລະ ຕິດຕາມກວດກາຕາມມະຕິທີ່ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ໄດ້ຮັບຮອງ; ໃນວັນທີ 29 ພຶດສະພາ 2024 ທ່ານນາງ ພຶດສະໄໝ ຕົ້ນສະຫວັນ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສປນວ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ຢູ່ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ນະຄອນຫຼວງວຽງຈັນ (ນວ) ໂດຍການຕ້ອນຮັບຂອງທ່ານ ບຸນປອນ ບຸນສົມຫວັງ ຫົວໜ້າກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ນວ, ມີບັນດາຫົວໜ້າ-ຮອງຫົວໜ້າຂະແໜງການເຂົ້າຮ່ວມ.

ທ່ານ ບຸນປອນ ບຸນສົມຫວັງ ໄດ້ລາຍງານໃຫ້ຊາບວ່າ: ໃນໄລຍະ 6 ເດືອນຕົ້ນປີ 2024 ການເກັບລາຍຮັບຄ່າບໍລິການວິຊາການ ສາມາດເກັບລາຍຮັບໄດ້ 18 ຕື້ 936 ລ້ານກວ່າກີບ, ເທົ່າກັບ 77% ຂອງແຜນປີ ເຊິ່ງການເກັບລາຍງານຄ່າບໍລິການແມ່ນເກັບຄ່າບໍລິການທະບຽນຍານພາຫະນະ, ການສອບເສັງການຂັບຂີ່ ແລະ ອື່ນໆ. ການປະຕິບັດແຜນລາຍຈ່າຍວິຊາການສາມາດປະກອບເອກະສາລາຍຈ່າຍງົບປະມານໄດ້ 14 ຕື້ 80 ລ້ານກວ່າກີບ ເທົ່າກັບ 57% ຂອງແຜນປີ, ການປະກອບເອກະສານລາຍຈ່າຍແມ່ນໄດ້ປະສານສົມທົບ ແລະ ຂໍຄຳແນະນຳຈາກພະແນກການເງິນນວເພື່ອເຮັດໃຫ້ການປະກອບເອກະສານຖືກຕ້ອງແລະຄົບຖ້ວນຕາມລະບຽບການ. ນອກຈາກນີ້, ການ

ອ່ານຕໍ່ໜ້າ 7

# ສພຂ 6 ແຂວງພາກເໜືອ ພົບປະແລກປ່ຽນ ບົດຮຽນວຽກງານຮອບດ້ານຂອງຄະນະເລຂາທິການ



(ສພຊ) - ກອງປະຊຸມພົບປະແລກປ່ຽນບົດຮຽນວຽກງານຮອບດ້ານຂອງຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) 6 ແຂວງພາກເໜືອຄື: ຫຼວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ຜົ້ງສາລີ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 22-24 ພຶດສະພາ 2024 ທີ່ເມືອງຜົ້ງສາລີ ແຂວງຜົ້ງສາລີ ໂດຍການເປັນປະທານຮ່ວມຂອງທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງຜົ້ງສາລີ ພ້ອມດ້ວຍປະທານ-ຮອງປະທານສະພາປະຊາຊົນ 6 ແຂວງດັ່ງກ່າວ, ມີເລຂາ-ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານ-ລັດຖະກອນ ທີ່ຂຶ້ນກັບຄະນະເລຂາທິການສະພາປະຊາຊົນ6ແຂວງພາກເໜືອ ເຂົ້າຮ່ວມທັງໝົດ 70 ກວ່າທ່ານ.

ໃນກອງປະຊຸມ, ທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງຜົ້ງສາລີ ໄດ້ຂຶ້ນສະເໜີບົດຮຽນກ່ຽວກັບການເປັນເສນາທິການວຽກງານຮອບດ້ານໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງເປັນຕົ້ນວຽກງານຄົ້ນຄວ້າ-ສັງລວມເນື້ອໃນ, ການຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ, ການຄຸ້ມຄອງວຽກງານຈັດຕັ້ງ-ພະນັກງານ ແລະ ການພົວພັນປະສານງານ; ທ່ານ ມີໄຊ ມີວິໄລ ເລຂາທິການສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຂຶ້ນສະເໜີບົດຮຽນກ່ຽວກັບການກະກຽມຮ່າງບົດສະຫຼຸບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາປະຊາຊົນແຂວງ, ທ່ານ ນາງ ວັນສີ ພວງມາໄລ ເລຂາທິການສະພາປະຊາຊົນແຂວງອຸດົມໄຊ ໄດ້ຂຶ້ນສະເໜີບົດຮຽນກ່ຽວກັບການກະກຽມຮ່າງບົດສະຫຼຸບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງ, ທ່ານ ບຸນພັດ ສີສົມບັດ ເລຂາທິການສະພາປະຊາຊົນແຂວງບໍ່ແກ້ວ ໄດ້ຂຶ້ນສະເໜີບົດຮຽນກ່ຽວກັບການກະກຽມສ້າງແຜນການ, ໜັງສືເຊີນ ແລະ ການສັງລວມບັນດາເນື້ອໃນໃຫ້ແກ່ກອງປະຊຸມປະທານ-ຮອງປະທານແລະກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ, ທ່ານ ສຸກມີໄຊ ສີງບຸນເຮືອງ ຮອງເລຂາທິການສະພາປະຊາຊົນແຂວງຫົວພັນ ໄດ້ຂຶ້ນສະເໜີບົດຮຽນກ່ຽວກັບການພົວພັນປະສານງານກັບບັນດາກົງຈັກການຈັດຕັ້ງພາຍໃນສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ພາກສ່ວນທີ່ກ່ຽວຂ້ອງໃນການກະກຽມ ແລະ ສະໜອງຂໍ້ມູນໃຫ້ແກ່ການດຳເນີນກອງປະຊຸມຂອງສະພາປະຊາຊົນແຂວງ, ທ່ານ ຄຳຫຼ້າ ແສງຄຳຢອງ ຮອງເລຂາທິການສະພາປະຊາຊົນແຂວງຊຽງຂວາງ ໄດ້ຂຶ້ນສະເໜີບົດຮຽນກ່ຽວກັບການກະກຽມຮ່າງບົດສະຫຼຸບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ.

ພ້ອມນັ້ນ, ບັນດາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ປະກອບຄວາມເຫັນ ແລະ ຕີລາຄາບັນດາບັນຫາຕ່າງໆ ໃຫ້ຖືກຕ້ອງ ແລະສອດຄ່ອງກັບສະພາບຄວາມເປັນຈິງ ພ້ອມທັງແລກປ່ຽນບົດຮຽນກ່ຽວກັບການເປັນເສນາທິການວຽກງານຮອບດ້ານຂອງຄະນະເລຂາທິການ, ຄະນະປະຈຳສະພາປະຊາຊົນແຂວງເປັນຕົ້ນແມ່ນວຽກງານຄົ້ນຄວ້າ-ສັງລວມເນື້ອໃນ, ການຄຸ້ມຄອງວຽກງານບໍລິຫານ, ແຜນການແລະການເງິນ, ການຄຸ້ມຄອງວຽກງານຈັດຕັ້ງ-ພະນັກງານ ແລະ ການພົວພັນປະສານງານ ໃນໄລຍະຜ່ານມາ, ດ້ານດີ, ຜົນງານທີ່ພົ້ນເດັ່ນ, ດ້ານອ່ອນຂໍ້ຄົງຄ້າງ ແລະ ສາຍເຫດພາໃຫ້ມີດ້ານດີ, ດ້ານອ່ອນ ແລະ ບົດຮຽນໃນການຈັດຕັ້ງວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງໃນຕໍ່ໜ້າ ທັງນີ້ກໍເພື່ອເຮັດໃຫ້ວຽກງານເສນາທິການໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງນັບມື້ມີຄຸນນະພາບຂຶ້ນເລື້ອຍໆ.

ກອງປະຊຸມຍັງໄດ້ປຶກສາຫາລື ແລະ ເອກະພາບກັນໂດຍພື້ນຖານ ກ່ຽວກັບທັດສະນະຊີ້ນຳ, ທິດທາງ, ຄາດໝາຍສູ້ຊົນ, ໜ້າທີ່ ແລະ ວຽກງານຈຸດສຸມຈຳນວນໜຶ່ງ ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານການເປັນເສນາທິການຮອດດ້ານໃນປີຕໍ່ໜ້ານີ້ໃຫ້ກາຍເປັນຂະບວນການທີ່ເຂັ້ມແຂງ, ກ້ວາງຂວາງ, ເລິກເຊິ່ງ ແລະ ມີປະສິດທິຜົນສູງກວ່າເກົ່າ.

ໃນໂອກາດຄັ້ງນີ້ບັນດາທ່ານຜູ້ແທນກອງປະຊຸມໄດ້ພ້ອມກັນສ້າງກິດຈະກຳກິລາບານເຕະມິດຕະພາບ ເພື່ອສ້າງຄວາມສາມັກຄີຮັກແພງເຊິ່ງກັນແລະກັນລະຫວ່າງສະພາປະຊາຊົນທັງ 6 ແຂວງ; ພ້ອມນັ້ນ, ຍັງໄດ້ໄປທ່ຽວຊົມ ແລະ ກາບໄຫວ້ພະທາດມິ່ງຂວັນພູຟ້າ ອັນເປັນສິ່ງສັກກະລະບູຊາແລະເປັນພະທາດຄູ່ບ້ານຄູ່ເມືອງຂອງຊາວຜົ້ງສາລີ.

**(ນາງ ອຳພອນ ສີປະເສີດ)**



# ສພຂ ສາລະວັນ ອົບຮົມວຽກງານຄຸ້ມຄອງ, ປົກປ້ອງ ແລະ ແກ້ໄຂວຽກງານສາສະໜາ

(ສພຊ) - ໃນລະຫວ່າງວັນທີ23-24 ພຶດສະພາ 2024 ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດກອງປະຊຸມເຝິກອົບຮົມວຽກງານຄຸ້ມຄອງ, ປົກປ້ອງ ແລະ ແກ້ໄຂວຽກງານສາສະໜາ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ວິຊາການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ສະໂມສອນເມືອງສະໝ້ອຍ ແຂວງສາລະວັນ ໂດຍການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງສາລະວັນ; ເຂົ້າຮ່ວມມີທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ, ມີພະອາຈານແສງມະນີ ສຸວິໄລຄຳ ຄະນະປະຈຳ ອພສ ແຂວງ, ຫົວໜ້າຫ້ອງການອົງການພຸດທະສາສະໜາສຳພັນລາວ ປະຈຳແຂວງສາລະວັນ, ມີປະທານ-ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ມີວິທະຍາກອນພາຍໃນສະພາປະຊາຊົນແຂວງ, ບັນດາທ່ານສຳມະນາກອນທີ່ເປັນສະມາຊິກສະພາປະຊາຊົນແຂວງ, ບັນດາທ່ານຕາງໜ້າພະແນກການທີ່ກ່ຽວຂ້ອງ, ຄະນະນຳຂອງອົງການປົກຄອງເມືອງ, ພະນັກງານກອງກໍ່ສ້າງຮາກຖານຂັ້ນເມືອງ ແລະ ບັນດາທ່ານຫົວໜ້າຫ້ອງການອ້ອມຂ້າງເມືອງ.



ທັງນີ້, ກໍເພື່ອເປັນການສ້າງຄວາມຮັບຮູ້ ແລະ ເຂົ້າໃຈເຖິງນະໂຍບາຍຂອງລັດ ຕໍ່ວຽກງານສາສະໜາຕ່າງໆ, ໂດຍສະເພາະການຄຸ້ມຄອງການເຄື່ອນໄຫວຂອງອົງການຈັດຕັ້ງພຸດທະສາສະໜາສຳພັນລາວ, ອົງການຈັດຕັ້ງສາສະໜາຄິດສະຕຽນພາຍໃນແຂວງ, ຍົກສູງຄວາມສາມາດກ່ຽວກັບວິທີແກ້ໄຂປາກົດການຫຍໍ້ທໍ້ຂອງສາສະໜາ ຢູ່ຂັ້ນຮາກຖານ ພ້ອມກັນປຶກສາຫາລືແກ້ໄຂບັນຫາທີ່ຍັງຄ້າງຄາ ເພື່ອຊອກວິທີທາງອອກໃຫ້ຖືກຕ້ອງສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳທີ່ກ່ຽວຂ້ອງຂອງສູນກາງ ແລະ ທ້ອງຖິ່ນ ທັງຍົກສູງຂີດຄວາມສາມາດທາງດ້ານວຽກງານຊົນເຜົ່າ ນະໂຍບາຍຂອງລັດຕໍ່ວຽກງານຊົນເຜົ່າ, ການພັດທະນາເສດຖະກິດ-ສັງຄົມຂອງຊົນເຜົ່າຕ່າງໆ ເຊິ່ງຕິດພັນກັບການເຊື່ອຖືຮີດຄອງປະເພນີ, ການເຊື່ອຖືສາສະໜາຕ່າງໆ, ຮັບຮູ້ເຖິງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສພຂ ສາລະວັນ.

ການເຝິກອົບຮົມໃນຄັ້ງນີ້ ປະກອບມີ 10 ຫົວຂໍ້ຄື: ດຳລັດ 315/ລບ, ລົງວັນທີ 16 ສິງຫາ 2016 ກ່ຽວກັບການຄຸ້ມຄອງ, ປົກປ້ອງການເຄື່ອນໄຫວວຽກງານສາສະໜາຢູ່ ສປປ ລາວ; ດຳລັດວ່າດ້ວຍວຽກງານຊົນເຜົ່າ ສະບັບເລກທີ 207/ລບ, ລົງວັນທີ 20 ມີນາ 2020; ທຳມະນູນສົງລາວ (ພະພຸດທະສັງກາດ 2561); ທຳມະນູນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວສາສະໜາຄຣິສຕຽນ ຂອງສູນລວມຄຣິສຕະຈັກຂ່າວປະເສີດ ສປປ ລາວ ເລກທີ 137/ຄຂລ, ລົງວັນທີ 19 ທັນວາ 2019; ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ສະບັບເລກທີ 100/ຄຈສຂ, ລົງວັນທີ 01 ກັນຍາ 2021; ພາລະບົດບາດຂອງຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າ; ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ກົນໄກປະສານງານລະຫວ່າງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກັບບັນດາພະແນກການ-ອົງການທຽບເທົ່າອ້ອມຂ້າງແຂວງ, ສະບັບເລກທີ 19/ຄຈສຂ.ສວ, ລົງວັນທີ 25 ມັງກອນ 2024; ບົດລາຍງານວຽກງານການຄຸ້ມຄອງ, ປົກປ້ອງ ແລະແກ້ໄຂວຽກງານສາສະໜາຂອງເມືອງຕະໂອ້ຍ; ບົດລາຍງານວຽກງານການຄຸ້ມຄອງ, ປົກປ້ອງ ແລະແກ້ໄຂວຽກງານສາສະໜາຂອງເມືອງສະໝ້ອຍ; ບົດລາຍງານ ວຽກງານການຄຸ້ມຄອງ, ປົກປ້ອງ ແລະ ແກ້ໄຂວຽກງານສາສະໜາຂອງເມືອງຕຸ້ມລານ.

ເຊິ່ງໃນທີ່ປະຊຸມຜູ້ແທນທີ່ເຂົ້າຮ່ວມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນບົດຮຽນກັນເຮັດໃຫ້ແຜນການຈັດກອງປະຊຸມເຝິກອົບຮົມ ໄດ້ຮັບຜົນສຳເລັດຕາມຈຸດປະສົງແລະລະດັບຄາດໝາຍທີ່ວາງໄວ້.

ສະໜັບສະໜູນງົບປະມານໂດຍ: ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPs).

**(ນາງ ມິດຕາວັນ ແສງບົວລະພາ)**

## ຮອງປະທານ...

(ຕໍ່ຈາກໜ້າ 6)

ຈັດເກັບຄ່າທຳນຽມຄ່າທາງໃຫ້ກົມສ່ວຍສາອາກອນ ກະຊວງການເງິນແມ່ນສາມາດປະຕິບັດໄດ້ 16 ຕື້ 347 ລ້ານກວ່າກີບ ຕິດພັນກັບຜົນສຳເລັດໃນດ້ານຕ່າງໆ ກໍຍັງມີຫຼາຍຂໍ້ຄົງຄ້າງ ທີ່ເຮັດໃຫ້ການປະຕິບັດວຽກງານມີຄວາມຫຍຸ້ງຍາກ ເປັນຕົ້ນການອະນຸມັດເອກະສານລາຍຈ່າຍຈາກຄັງເງິນເພື່ອໂອນຊຳລະສະສາງມີຄວາມຊັກຊ້າ, ການປະຕິບັດລາຍຈ່າຍທີ່ໄດ້ຮັບຜົນກະທົບຈາກສະພາບເສດຖະກິດລາຄາວັດຖຸ, ອຸປະກອນຕ່າງໆລາຄາສູງເຮັດໃຫ້ຕົວເລກແຜນງົບປະມານປະຈຳປີບໍ່ພຽງພໍກັບລາຍຈ່າຍ, ອັດຕາແລກປ່ຽນເງິນຕາເພີ່ມຂຶ້ນ ເຮັດໃຫ້ການຜະລິດໃບທະບຽນ ແລະ ໃບຂັບຂີ່ຖາວອນ ຕົ້ນທຶນເພີ່ມຂຶ້ນເນື່ອງຈາກນຳເຂົ້າວັດຖຸດິບຈາກຕ່າງປະເທດ.

ໂອກາດດັ່ງກ່າວ, ຄະນະລົງເຮັດວຽກກໍໄດ້ມີຄຳເຫັນແລກປ່ຽນຕໍ່ການລາຍງານແລະເຈາະຈີ້ມຕໍ່ບາງບັນຫາທີ່ເປັນທາງສຽງສັງຄົມ, ເຊິ່ງກໍໄດ້ຮັບການຊີ້ແຈງຕໍ່ບັນຫາຕ່າງໆທີ່ທາງຄະນະຜູ້ແທນໄດ້ຊັກຖາມແລະໃນຕອນທ້າຍທ່ານ ນາງ ພຶດສະໄໝ ຕົ້ນສະຫວັນ ກໍໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາແລະໃຫ້ສືບຕໍ່ປະຕິບັດວຽກງານທີ່ຍັງຄົງຄ້າງໃຫ້ສຳເລັດບັນລຸຄາດໝາຍທີ່ວາງໄວ້ ພ້ອມທາງຮັບຮອງເອົາບັນຫາທີ່ເປັນຂໍ້ຫຍຸ້ງຍາກຂອງກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ນວ ເພື່ອຈະນຳໄປສະເໜີຫາພາກສ່ວນກ່ຽວຂ້ອງ ເພື່ອມີທິດທາງແກ້ໄຂໃນຕໍ່ໜ້າ.



## ລະດົມ...

(ຕໍ່ຈາກໜ້າ 1)

ການ, ການເງິນ ແລະ ການກວດສອບມີເນື້ອໃນທີ່ຄົບຖ້ວນສົມບູນ ແລະ ສອດຄ່ອງກັບຕົວຈິງ; ທົບທວນຄືນເນື້ອໃນຜົນການສ້າງປຶ້ມຄູ່ມືຂອງກຳມາທິການທີ່ກ່ຽວຂ້ອງກັບການພິຈາລະນາຮັບຮອງ, ການຕິດຕາມ, ຕົວຊີ້ວັດມະຕິສະພາແຫ່ງຊາດ ແລະ ຄວາມຮູ້ພື້ນຖານຂອງກຳມາທິການໃຫ້ມີເນື້ອໃນຮັດກຸມ, ຈະແຈ້ງ ເພື່ອສາມາດນຳໄປເປັນເອກະສານຄູ່ມືໃຫ້ແກ່ກຳມະການ ແລະ ພະນັກງານວິຊາການຂອງກຳມາທິການ ກຜງສ; ປັບປຸງບັນດາປຶ້ມຄູ່ມື ແລະ ປຶ້ມຄວາມຮູ້ພື້ນຖານໃນຂົງເຂດກຳມາທິການດັ່ງກ່າວ ໃຫ້ສຳເລັດສົມບູນເພື່ອນຳໄປສືບຕໍ່ຈັດພິມ ແລະ ນຳໄປຈັດຕັ້ງປະຕິບັດ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ປຶກສາຫາລືປະກອບຄຳເຫັນໃສ່ປຶ້ມຄູ່ມືການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; ປຶ້ມຄູ່ມືການຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; ປຶ້ມຄູ່ມືຕົວຊີ້ວັດມະຕິກອງປະຊຸມສະພາແຫ່ງຊາດກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; ປຶ້ມຄວາມຮູ້ພື້ນຖານເສດຖະສາດ, ການວາງແຜນການ ແລະ ການລົງທຶນ ເພື່ອການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; ປຶ້ມຄວາມຮູ້ພື້ນຖານການເງິນ ແລະ ງົບປະມານ ເພື່ອການພິຈາ ລະນາຮັບຮອງແຜນງົບປະມານແຫ່ງລັດ; ປຶ້ມຄວາມຮູ້ພື້ນຖານເງິນຕາ ແລະ ທະນາຄານ ເພື່ອການພິຈາລະນາຮັບຮອງແຜນເງິນຕາ; ປຶ້ມຄວາມຮູ້ພື້ນຖານສະຖິຕິ ແລະ ການວິໄຈປະລິມານ ເພື່ອການພິຈາລະນາຮັບຮອງ ແລະ ການຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິອາຊີ (TAF) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**



## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ສະຫວັນ ເຄືອມີໄຊ ຄະນະປະຈຳພັກ, ຮອງຫົວໜ້າສະຖາບັນການເມືອງ-ການປົກຄອງແຫ່ງຊາດ, ບັນດາສະຫາຍຕາງໜ້າ 10 ໜ່ວຍພັກຮາກຖານ ແລະ 7 ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານເລຂາທິການ ສພຊ, ຄະນະຮັບຜິດຊອບຊຸດເຝິກອົບຮົມ, ບັນດາຄູອາຈານ ແລະ ນັກເຝິກອົບຮົມເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ສະຫາຍ ແສງແກ້ວວົງນະລາດຄະນະພັກຮາກຖານເລຂາທິການສະພາແຫ່ງຊາດ, ຫົວໜ້າກົມຈັດຕັ້ງ-ພະນັກງານ ໃຫ້ຮູ້ວ່າ: ຊຸດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ II ແລະ ເຝິກ ອົບຮົມວຽກງານພັກ-ພະນັກງານ ຊຸດທີ V ໄດ້ດຳເນີນແຕ່ວັນທີ 19 ກຸມພາ 2024 ເປັນຕົ້ນມາເຊິ່ງມີສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດເຂົ້າຮ່ວມ 43 ສະຫາຍ ຍິງ 16 ສະຫາຍ, ໃນນັ້ນມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າພະແນກ 3 ສະຫາຍ ຍິງ 2 ສະຫາຍ, ພະນັກງານວິຊາການ 40 ສະຫາຍ ຍິງ 14 ສະຫາຍ ເຊິ່ງມີບັນດາຄູອາຈານຈາກສະຖາບັນການເມືອງ-ການປົກຄອງແຫ່ງຊາດຂຶ້ນບັນລະຍາຍໃນຫົວຂໍ້ຕ່າງໆ ແລະ ພະນັກງານການນຳຂອງສະພາແຫ່ງຊາດ ຂຶ້ນຫ້ອງໃຫ້ຄວາມຮູ້ກ່ຽວກັບຄະນະພັກສະພາແຫ່ງຊາດ. ຫຼັງຈາກນັ້ນ, ກໍໄດ້ມີພິທີມອບ-ຮັບໃບຢັ້ງຢືນໃຫ້ແກ່ນັກເຝິກອົບຮົມ ເຊິ່ງມອບໃບຢັ້ງຢືນວຽກງານພັກ-ພະນັກງານ ໂດຍສະຫາຍ ນາງ ປິ່ງຄຳ ລາຊະສິມມາ ແລະ ມອບໃບຢັ້ງຢືນທິດສະດີການເມືອງຂັ້ນຕົ້ນ ໂດຍສະຫາຍ ປອ. ດາວສະຫວັນ ເຄືອມີໄຊ.

ໂອກາດດັ່ງກ່າວ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມ ໂດຍໄດ້ຕີລາຄາສູງຕໍ່ຄະນະພັກ, ບັນດາຄູອາຈານຈາກສະຖາບັນການເມືອງ-ການປົກຄອງແຫ່ງຊາດທີ່ມີຄວາມຮັບຜິດຊອບສູງໃນການຂຶ້ນຫ້ອງສິດສອນ, ຖ່າຍທອດຄວາມຮູ້, ປະສົບການທາງດ້ານທິດສະດີ ແລະ ສົມທຽບໃສ່ພຶດຕິກຳຕົວຈິງຂອງປະທດເຮົາ ເຮັດໃຫ້ສະມາຊິກພັກ, ພະນັກງານຂອງສະພາແຫ່ງຊາດເຊິ່ງເປັນນັກເຝິກອົບຮົມທີ່ມາຈາກຫຼາຍກົມກອງ, ຫຼາຍໜ້າທີ່ວຽກງານ ແລະ ລະດັບແຕກຕ່າງກັນ ໄດ້ຮຽນຮູ້ຢ່າງເປັນລະບົບກ່ຽວກັບຫຼັກມູນພື້ນຖານຂອງທິດສະດີມາກ-ເລນິນ,ແນວຄິດ ໄກສອນ ພົມວິຫານ ກໍຄືພຶດຕິກຳໃນການໝູນໃຊ້ໃນປະເທດເຮົາໃນໄລຍະຜ່ານມາ; ສະແດງຄວາມຊົມເຊີຍນັກເຝິກອົບຮົມທີ່ໄດ້ເອົາໃຈໃສ່ປະຕິບັດກົດລະບຽບ ກໍຄືການປະຕິບັດໂມງເວລາ, ຕັ້ງໜ້າເອົາໃຈໃສ່ສຶກສາຄົ້ນຄວ້າຮ່ຳຮຽນບັນດາຫຼັກມູນທິດສະດີ ແລະ ພຶດຕິກຳຕົວຈິງທີ່ຄະ ນະພັກ, ຄູ-ອາຈານ ຖ່າຍທອດໃຫ້ພ້ອມທັງໄດ້ໄປທັດສະນະສຶກສາ, ຂຽນບົດເກັບກ່ຽວ, ປ້ອງກັນບົດ ແລະ ໄດ້ຮັບໃບຢັ້ງຢືນໃນລະດັບດີສົມຄວນ.

ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກຍັງໄດ້ເນັ້ນໜັກໃຫ້ບັນດານັກເຝິກອົບຮົມສືບຕໍ່ຄົ້ນຄວ້າທົບທວນຄືນເລື້ອຍໆບັນດາຫຼັກມູນພື້ນຖານຂອງທິດສະດີມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ ກໍຄືອຸດົມການສັງຄົມນິຍົມທີ່ພັກເຮົາໄດ້ຍຶດໝັ້ນມາຕະຫຼອດ, ຮູ້ຈັກໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ການເມືອງຂອງຕົນຢ່າງປະດິດສ້າງ ແລະ ແທດເໝາະກັບຕົວຈິງ; ຍຶດໝັ້ນແລະເປັນເອກະພາບຕໍ່ແນວທາງປ່ຽນແປງໃໝ່ຂອງພັກ, ຄົ້ນຄວ້າເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດເຮັດໃຫ້ການປະຕິບັດໜ້າທີ່ວຽກງານຄ່ອງແຄ້ວຂຶ້ນຕື່ມ ແລະ ແກ້ໄຂບັນຫາຕ່າງໆໄດ້ຢ່າງທັນການ, ມີແນວຄິດອຸ່ນອຽນທຸ່ນທ່ຽງ ແລະເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ; ສືບຕໍ່ຍົກສູງຄຸນທາດການເມືອງ,ເຝິກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ, ຄວາມຮູ້ຄວາມສາມາດຢ່າງບໍ່ຢຸດຢັ້ງ, ເຊີດຊູຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ, ກ້າຫານຕໍ່ຕ້ານປາກົດ ການຫຍໍ້ທໍ້ຕ່າງໆ. ສະຫາຍຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດຍັງໄດ້ສະເໜີໃຫ້ແຕ່ລະຮາກຖານພັກ ຕ້ອງເອົາໃຈໃສ່ມອບວຽກງານ, ກໍ່ສ້າງ, ຕິດຕາມ, ຊຸກຍູ້ບັນດານັກເຝິກອົບຮົມຊຸດນີ້ ໃຫ້ກາຍເປັນພະນັກງານ, ສະມາຊິກພັກທີ່ປອດໃສເຂັ້ມແຂງໜັກແໜ້ນສືບຕໍ່ເປັນກຳລັງແຮງໃຫ້ແກ່ການປະຕິບັດໜ້າທີ່ຂອງສະພາແຫ່ງຊາດ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ລະກົດ 2024 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ ເຊິ່ງຈະໃຊ້ເວລາດຳເນີນກອງປະຊຸມທັງໝົດ 17 ວັນ (ບໍ່ລວມວັນພັກລັດຖະການ); ກອງປະຊຸມສະໄໝສາມັນເທື່ອນີ້ ຈະພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດດັ່ງນີ້:

1. ວຽກງານຂອງລັດຖະບານ ປະກອບມີ:

1) ບົດລາຍງານໂດຍສັງລວມຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024 ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນແລະການແກ້ໄຂບັນຫາຢາເສບຕິດ;

2) ບົດລາຍງານຂອງກະຊວງແຜນການ ແລະ ການລົງທຶນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024 ໂດຍຫຍໍ້;

3) ບົດລາຍງານຂອງກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024 ໂດຍຫຍໍ້;

4) ບົດລາຍງານຂອງທະນາຄານ ແຫ່ງ ສປປ ລາວ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024 ໂດຍຫຍໍ້;

5) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາໂຄງການລົງທຶນແຮ່ທາດໃນໄລຍະຜ່ານມາ ແລະ ກຳນົດແຜນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ 2023 ວ່າດ້ວຍການຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດຮອດປີ 2030;

6) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 82/ສພຊ, ລົງວັນທີ 30 ທັນວາ 2022.

2. ວຽກງານກວດສອບແຫ່ງລັດ: ບົດລາຍງານຂອງອົງການກວດສອບແຫ່ງລັດກ່ຽວກັບການແກ້ໄຂຜົນການກວດສອບປະຈຳປີ 2022.

3. ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 13 ສະບັບ ໃນນີ້: ຮ່າງກົດໝາຍສ້າງໃໝ່ 2 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ແລະ ຮ່າງກົດໝາຍວ່າດ້ວຍສະຫະກອນ; ກົດໝາຍປັບປຸງ 11 ສະບັບ ຄື: 1) ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເອັດຈ໌ໄອວີ/ພະຍາດເອດ, 2) ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, 3) ກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, 4) ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, 5) ກົດໝາຍວ່າດ້ວຍການທ່ອງທ່ຽວ, 6) ກົດໝາ ຍວ່າດ້ວຍອາກອນມູນຄ່າເພີ່ມ, 7) ກົດໝາຍວ່າດ້ວຍການສະກັດກັ້ນແລະຕ້ານອັກຄີໄພ, 8.) ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, 9) ກົດໝາຍວ່າດ້ວຍສະພາແຫ່ງຊາດ, 10) ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, 11) ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

4. ວຽກງານສະພາແຫ່ງຊາດ ປະກອບມີ:

1) ບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ແລະ ແຜນການເຄື່ອນໄຫວຮອດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX;

2) ບົດລາຍງານກ່ຽວກັບຄວາມຈຳເປັນ ແລະ ທິດທາງໃນການປັບປຸງລັດຖະທຳມະນູນແຫ່ງ ສປປລາວ ສະບັບປີ 2015.

ກອງປະຊຸມສະພາແຫ່ງຊາດໃນເທື່ອນີ້ ຈະໄດ້ພິຈາລະນາຮັບຮອງເອົາມະຕິ ຈຳນວນ 19 ສະບັບ ໃນນີ້: ມະຕິຮັບຮອງເອົາບົດລາຍງານຂອງລັດຖະບານ 4 ສະບັບ, ມະຕິຮັບຮອງເອົາວຽກງານອົງການກວດສອບແຫ່ງລັດ 1 ສະບັບ, ມະຕິຮັບຮອງເອົາວຽກງານສະພາແຫ່ງຊາດ 1 ສະບັບ, ມະຕິຮັບຮອງເອົາວຽກງານການສ້າງ ແລະ ປັບປຸງກົດໝາຍ 13 ສະບັບ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໃນນາມຫົວໜ້າກອງເລຂາກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX, ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ເຊີນຊວນບັນດາທ່ານພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງຕິດຕາມການດຳເນີນກອງປະຊຸມໃນຄັ້ງນີ້ ແລະ ຍັງແຈ້ງໃຫ້ຊາບວ່າ ໃນໄລຍະດຳເນີນກອງປະຊຸມ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມ ເຊິ່ງສາມາດສົ່ງໄດ້ຕາມວິທີລຸ່ມນີ້:

- ສາຍດ່ວນ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- App: Laona




# ເສດຖະກິດເອກະລາດ ໃນໄລຍະໃໝ່

# ດົ້ນກົບເມກ

ກົມການເມືອງສູນກາງພັກ ໄດ້ອອກມະຕິ 04 ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່ ເຊິ່ງເນື້ອແທ້ແມ່ນການຍົກສູງສະຕິຊາດ; ເສີມຂະຫຍາຍສະຕິປັນຍາ ກຳລັງແຮງແລະຄວາມສາມາດແຂ່ງຂັນຂອງຄົນໃນຊາດເພື່ອຂຸດຄົ້ນທ່າແຮງບົ່ມຊ້ອນດ້ານຊັບພະຍາກອນມະນຸດ, ຊັບພະຍາກອນທຳມະຊາດ-ວັດທະນະທຳ-ສັງຄົມ ຢ່າງມີການວາງແຜນ, ມີຍຸດທະສາດ ແລະ ຄຳນຶງເຖິງປະສິດທິພາບ, ປະສິດທິຜົນ ແລະ ຄວາມກຸ້ມຄ່າ ຂອງການນຳໃຊ້ຄວາມສາມາດບົ່ມຊ້ອນຂອງຊັບພະຍາກອນທີ່ມີ ເພື່ອຕອບສະໜອງໃຫ້ແກ່ການປົກປັກຮັກສາປະເທດຊາດແລະການພັດທະນາທີ່ຍືນຍົງ.

ການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ເລີ່ມຈາກຕ່ຳຫາສູງ ຈາກນ້ອຍຫາໃຫຍ່ ແຕ່ຕ້ອງບົນພື້ນຖານການບຸກບືນສູ້ຊົນສູງສຸດ, ໃຊ້ເວລາອັນເໝາະສົມ ດ້ວຍຈິດໃຈເດັ່ງຮ້ອນ ບໍ່ອະນຸຍາດໃຫ້ແກ່ຍາວໂດຍບໍ່ມີບາດກ້າວເດີນທີ່ຈະແຈ້ງ ແລະ ປ່ອຍໄປຕາມມີຕາມເກີດໄດ້ອີກ; ດັ່ງນັ້ນ, ກ່ອນອື່ນໝົດຕ້ອງບຸກທະລຸດ້ານຈິນຕະນາການ, ສ້າງຄວາມຮັບຮູ້ ຄວາມເຂົ້າໃຈທົ່ວພັກທົ່ວລັດ ... ເພື່ອຂຸດຄົ້ນນຳໃຊ້ສິ່ງທີ່ມີຢູ່ ຮູ້ອີງໃສ່ທ່າແຮງບົ່ມຊ້ອນ, ຮູ້ວາງແຜນນຳໃຊ້ຄຸ້ມຄອງຊັບພະຍາກອນຂອງທຳມະຊາດ... ຮູ້ປະຢັດ, ຮູ້ຕໍ່ຍອດ, ຮູ້ສະສົມ, ຮູ້ໃຊ້ຈ່າຍຢ່າງກຸ້ມຄ່າ ເກີດດອກອອກຜົນ, ຂໍ້ທີ 3 ຂອງມະຕິດັ່ງກ່າວຍັງເນັ້ນວ່າ: ນອກຈາກການເປັນເຈົ້າການພັດທະນາຊັບພະຍາກອນມະນຸດແລ້ວ ຍັງຕ້ອງມີການພັດທະນາພື້ນຖານການຜະລິດ ການບໍລິການ, ສ້າງໃຫ້ມີຜະລິດຕະພັນທີ່ຫຼາກຫຼາຍ, ພັດທະນາລະບົບການເງິນ-ເງິນຕາໃຫ້ເຂັ້ມແຂງ... ຂໍ້ທີ 4 ໄດ້ເວົ້າວ່າ ຕັ້ງໜ້າຍົກສູງຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເສີມຂະຫຍາຍຄວາມບາກບັ່ນສູ້ຊົນສູງສຸດຂອງຕົນເອງ ເປັນສິ່ງຕັດສິນຕົ້ນຕໍໃນການຮັບປະກັນຄວາມເປັນເອກະລາດ..., ຂໍ້ທີ 5 ໄດ້ບອກເຖິງເປົ້າໝາຍທີ່ຕ້ອງບັນລຸການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ແມ່ນເຮັດໃຫ້ສັງຄົມລາວ, ຄົນລາວ ຍົກລະດັບວິຖີຊີວິດ ແລະ ການທຳມາຫາກິນແບບໃໝ່... ເດີນໜ້າດ້ວຍລຳຂາຕົນເອງ, ມີຄ່ານິຍົມສິນຄ້າລາວໃຫ້ຫຼາຍຂຶ້ນ, ຮູ້ນຳໃຊ້ຊັບພະຍາກອນທີ່ມີໃຫ້ເປັນທຶນຮອນ ແຕ່ຊັບພະຍາກອນຂອງຊາດ ຕ້ອງປົກປັກຮັກສາ ແລະ ນຳໃຊ້ຢ່າງຍືນຍົງ ແລະ ຍາວນານ...

ສັງລວມໄດ້ວ່າ: ການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງແມ່ນເພື່ອສ້າງໃຫ້ຄົນລາວຮູ້ຈັກພັດທະນາຕົນເອງ ໃຫ້ເຂັ້ມແຂງ-ເພິ່ງຕົນເອງໃຫ້ໄດ້, ຮູ້ປົກປັກຮັກສາ-ສົ່ງເສີມຊັບພະຍາກອນ, ສິລະປະວັດທະນະທຳໃຫ້ຈະເລີນກ້າວໜ້າ.




# ວິທີເຮັດວຽກ

**ພາກທີ 5**
**ວິທີນຳ**

ການເລືອກຄົນ ແລະ ປ່ຽນຄົນ ກໍເປັນບັນຫາສຳຄັນອັນໜຶ່ງໃນການນຳພວກຄົນທີ່ຕິດພະຍາດອາດຍາພະຍາດຢູ່ແຕ່ຫ້ອງການ, ຜູ້ທີ່ບໍ່ເຮັດວຽກໄດ້ນັ້ນຕ້ອງປ່ອຍອອກໄປ, ນອກຈາກນັ້ນ ກໍຍັງມີຄົນອີກສອງຈຳພວກທີ່ຕ້ອງເອົາໃຈໃສ່ຄື: ຈຳພວກໜຶ່ງແມ່ນພວກຄົນທີ່ມັກອ້າງວ່າຕົນເອງເປັນຜູ້ທີ່ມີຄຸນຄວາມດີຕໍ່ການປະຕິວັດ, ແລ້ວເຮັດທົ່ວທົບຢ່າງກວ້າງຂວາງຕາມໃຈຕົນເອງ ບໍ່ຖືກລະບຽບວິໄນ ບໍ່ປະຕິບັດມະຕິຕຶກລົງ, ຄຳສັ່ງຂອງພັກ ແລະ ຂອງລັດຖະບານ. ເຮັດແນວນັ້ນແມ່ນເຂົາອວດໂຕ, ມ້າງລະບຽບວິໄນຂອງພັກ ແລະ ຂອງລັດຖະບານ. ຕ້ອງເຊີນພວກເຂົາລົງໄປເຮັດວຽກໃນໜ້າທີ່ຊັ້ນຕ່ຳ, ບັງຄັບເຂົາເຂົ້າລະບຽບວິໄນເພື່ອແກ້ໄຂແນວຄິດອວດໂຕ ແລະນິໄສອາດຍາໃຫ້ເຂົາເສຍກ່ອນ, ເພື່ອຮັກສາລະບຽບວິໄນຂອງພັກ ແລະ ຂອງລັດຖະບານ.

ຈຳພວກທີສອງ ແມ່ນພວກຄົນທີ່ເປັນແຕ່ປາກເວົ້າ ແລ້ວກໍຕົນເອງຕ້ອງລົງໄປບໍ່ເຮັດ, ຄົນຈຳພວກນີ້ແມ່ນວ່າເຂົາສັດຊື່ຈິງໃຈພຽງໃດກໍບໍ່ມີຄວາມສາມາດເຮັດວຽກໄດ້, ເພາະເຂົາມີແຕ່ເວົ້າລ້າໆ ເວົ້າຫຼາຍເວົ້າງາມ, ພວກເຮົາ ຄວາມບໍ່ຈິງກໍ່ເວົ້າ. ມັກເຮັດລາຍງານຂີ້ຕົວະ, ອັນໂຕເຮັດບໍ່ໄດ້ກໍວ່າເຮັດໄດ້ດີໄດ້ຫຼາຍ, ບາດໄປກວດເບິ່ງເຖິງບ່ອນເລີຍບໍ່ເຫັນວ່າເຮັດອັນໃດໄດ້. ໃນພັກເຮົາຜູ້ເປັນແຕ່ປາກແນວນັ້ນກໍຍັງມີ, ເຂົາມີແຕ່ຄົນຊ່ວຍວຽກ ເວົ້າເພື່ອໃຫ້ຄົນເຫັນວ່າໂຕຮູ້ເວົ້າ. ເວົ້າໂມງນີ້ເຖິງໂມງໜ້າ ມື້ນີ້ເຖິງມື້ໜ້າ, ແຕ່ວ່າວຽກການອັນແທ້ຈິງນັ້ນເຂົາບໍ່ໄດ້ເຮັດຫຍັງ. ຄົນຜູ້ເປັນແນວນັ້ນກໍບໍ່ໃຊ້ວຽກການຕົວຈິງໄດ້.

ອ່ານຕໍ່ສະບັບໜ້າ...




# ຊາຕາ – ຊະຕາ

'ຊາຕາ' ເປັນຄຳນາມຈາກເຄົ້າປາລີ-ສັນສະກິດ jāta (ຊາຕະ) ແລ້ວແປງສຽງເປັນຄຳລາວວ່າ 'ຊາຕາ' ທີ່ໝາຍເຖິງ "ເວລາເກີດຂອງຄົນ, ການເປັນຂຶ້ນມາ, ວັນເດືອນປີເກີດ" ເຊັ່ນ

- ໃບລາຍເກີດ ລາງເທື່ອເພິ່ນກໍເອີ້ນວ່າ ໃບຊາຕາ.

'ຊາຕາ' ຍັງໝາຍເຖິງ "ໂຊກ ຫຼືລັກສະນະທີ່ບັງເກີດເຖິງເຫດດີແລະຮ້າຍ" ເຊັ່ນ

- ຊາຕາຂອງອ້າຍຊ່າງມາອາພັບແທ້ນໍ!
- ຫວ່າງນີ້ຊາຕາຕົກຕ່ຳ ເຮັດຫຍັງກໍບໍ່ໂຊກບໍ່ໝານນຳເພິ່ນ.
- ໂຊກຕ່າງລ່າງກະຊາຕາຕ່າງລ່າງ ໂອ້ຍຈັ່ງແມ່ນໂຊກຕ່າງລ່າງກະຊາຕາຕ່າງລ່າງ...

ນອກຈາກນັ້ນ 'ຊາຕາ' ຍັງໝາຍເຖິງ "ລັກສະນະບາງຢ່າງທີ່ເຮັດໃຫ້ຮູ້ສຶກມັກຫຼືບໍ່ມັກຕັ້ງແຕ່ພົບກັນທຳອິດ" ເຊັ່ນ

- ອ້າຍອັນນີ້ຫາກໍພົບກັນເທື່ອທຳອິດ ຂ້ອຍກໍຮູ້ສຶກຖືກຊາຕາກັບລາວເອົາແທ້ເອົາວ່າ.

ສ່ວນຄຳວ່າ 'ຊະຕາ' ກໍແມ່ນຄຳທີ່ພ້ຽນສຽງມາຈາກ 'ຊາຕາ' ໃນເວລາເວົ້າ ແລະຍັງເຫັນນຳໄປຂຽນໃນໄລຍະຕໍ່ມາ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ພັກພາອາໄສ | ພັກພາອາໃສ |
| ນ້ຳໃສໃຈຈິງ | ນ້ຳໄສໃຈຈິງ |
| ພໍ່ແມ່ຫ່ວງໃຍ | ພໍ່ແມ່ຫວ່ງໄຍ |
| ລາວມັກຢອກໃຍ | ລາວມັກຢອກໄຍ |
| ນາງໃສ່ສິ້ນໄໝ | ນາງໄສ່ສິ້ນໃໝ |
| ປັບໃໝໃສ່ໂທດ | ປັບໄໝໄສ່ໂທດ |
| ຝັງຈິດຝັງໃຈ | ຝັງຈິດຝັງໄຈ |
| ວິໄຈວິຈານ | ວິໃຈວິຈານ |
| ງານແຫ້ໆໄດ້ | ງານແຫ້ໆໃດ |

# ແຈ້ງການ

ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມ, ເຊິ່ງສາມາດສົ່ງໄດ້ຕາມວິທີລຸ່ມນີ້:

- ສາຍດ່ວນ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- App: Laona



ສຸກສະບາຍທາຍໂລດ

# ວິທີສັງເກດເຫັດເບື່ອ (ເຫັດມີພິດ)

ໂດຍ: ທິວກະທິ





ການຫາເຫັດ ຫຼື ເກັບເຫັດມາກິນ ຄວນລະມັດລະວັງ ແລະ ເລືອກເຫັດສະເພາະທີ່ເຄີຍກິນ ເຫັດທີ່ສີສັນສວຍງາມ ເຫັດແນວແປກໆ ບໍ່ຄວນເກັບມາປຸງເປັນແຕ່ງອາຫານເດັດຂາດ ມື້ນີ້ເຮົາຈະມາແນະນຳວິທີການສັງເກດເຫັດເບື່ອ (ເຫັດມີພິດ) ຫຼາຍຄົນກໍມີການທົດສອບເຫັດພິດຕາມແບບບູຮານ ຫຼື ໄດ້ຍິນການເລົ່າຕໍ່ໆກັນມາ ແຕ່ຂໍຢືນຢັນວ່າ ວິທີເຫຼົ່ານັ້ນບໍ່ໄດ້ຜົນ 100% ສະເໝີໄປ ເຊິ່ງຈະມີວິທີໃດແດ່ ເຮົາໄປເບິ່ງພ້ອມກັນເລີຍ.

ວິທີສັງເກດເຫັດເບື່ອມີດັ່ງນີ້:

- ຕົ້ມເຫັດໃສ່ກັບເຂົ້າສານ ຖ້າເຫັດເປັນພິດເຂົ້າສານຈະປ່ຽນເປັນສີ.
- ໃຊ້ປູນກິນໝາກປ້າຍໃສ່ດອກເຫັດ ຖ້າເຫັດເປັນພິດ ຈະມີນ້ຳຢາງສີດຳອອກມາ.
- ຕົ້ມເຫັດໃສ່ກັບຫົວຫອມ ຖ້າເຫັດເປັນພິດຫົວຫອມຈະປ່ຽນສີ.
- ເຫັດທີ່ບໍ່ມີແມງເຈາະແປວ່າເປັນເຫັດທີ່ບໍ່ປອດໄພ.
- ເຫັດສວຍງາມມັກມີພິດ ເຫັດສີຂາວມີສັດຕູພິດ ກິນໄດ້ປອດໄພ.
- ໃຊ້ບ່ວງເງິນມາຄົນໝໍ້ ເວລາປຸງແຕ່ງອາຫານ ຖ້າເຫັດເປັນພິດ ບ່ວງຈະປ່ຽນສີ.

**ຂໍ້ມູນຈາກ:**
**www.medialaos.com**



ສົນທະນາ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສາວຈົ້ມ

✳ **ກອງ**ປະຊຸມສະໄໝສາມັນ**ເທື່ອທີ** 7 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ **10 ມິຖຸນາ** ທີ່ຫ້ອງປະຊຸມສະພາແຫ່ງຊາດ ແລະຈະດຳເນີນໄປຈົນເຖິງວັນທີ **2 ກໍລະກົດ 2024** ຄັ້ງນີ້ອຽກສະພາເປີດກວ້າງ ຟັງຄຳຄິດເຫັນ ຟັງປະເດັນສຳຄັນ ທົ່ວເໜືອກາງໃຕ້ ໃສ່ບັນຫາຂ້ອງ ໝອງໃຈໃຫ້ຖາມສິ່ງ 156 ເພິ່ນເປີດໄວ້ ບໍລິການຮັບໃຊ້ ປອງຮັບໄດ້ຍິນຄຳເຫັນ **ທ່ານເອີຍ!** (**156 ເປີດໃຫ້ບໍລິການໃນໂມງລັດຖະການ**)

✳ **ຂໍ**ສະແດງຄວາມຍິນດີນຳ**ລັບທອນ ຫຼວງຜ່ານ** ກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ທີ່ມີທາຍາດເປັນ**ໄຂທອງຄ້ອງໃຈຜູ້ທຳອິດ** ໃນວັນເດັກນ້ອຍສາກົນຜ່ານມາ ຂໍໃຫ້ຫຼານໃຫຍ່ກ້າ ສຸຂະພາບແຂງແຮງດີ ມີຜິວພັນສົດໃສ ອອນອັ້ນແຕ່ຍັງນ້ອຍ ໃຫ້ເຈົ້າໃຫຍ່ພຽງລຸງສູງພຽງປ້າ ໃສງາມຄືພໍ່ແມ່ ວິຊາການຮຸ່ງກ້າວ ທັງຄຳຮູ້ໃຫຍ່ສູງ **ແພງເອີຍ !**

✳ **ສະ**ແດງຄວາມເສຍໃຈນຳຄອບຄົວ**ອ້າຍພູວັນ ອິນທະວົງສາ** ພະນັກງານຂັບລົດຕາມສັນຍາ ສະພາແຫ່ງຊາດ ທີ່ໄດ້**ສູນເສຍຜູ້ເປັນມານດາ** ໃນວັນທີ 1 ມິຖຸນາຜ່ານມາ ລວມອາຍຸໄດ້ **82 ປີ** ບາລະມີແມ່ສ້າງ ບຸນເກົ່າປາງຫຼັງ ຂໍໃຫ້ນຳທາງໄປ ສູ່ສວງສະຫວັນຊັ້ນ ຂໍໃຫ້ດວງວິນຍານຂຶ້ນ ແດນເສົາລີຊ່າ **ພຸ້ນເນີ !** ດາວະດຶງບ່ອນເບື້ອງເທວະດາຊັ້ນຢູ່ອາໄສ **ເດີແມ່ເອີຍ !**

## ອວນຢ່າທຳລາຍ ສັດປ່າ-ປ່າໄມ້

ອາດ ກະວີລາວ

# ຫ.ສະຫວັນ

✳ ຄຸນຄ່າຂອງໄມ້
ຫາກທຳລາຍຕັດຮອນ
ເຮັດໃຫ້ໂລກາຮ້ອນ
ວາຕະໄພເດືອດຮ້ອນ

ມາກໃຫຍ່ຫຼວງຫຼາຍ
ປ່າດົງດອນໄມ້
ສັດຕາຍປະປ່າ
ໄພແລ້ງທົ່ວກັນ

✳ ມັນຫາກເປັນເລື່ອງເສົ້າ
ພາກັນໜີປົບຕາຍ
ໜີໄກລັນທະນູໜ້າ
ອາວຸດປືນໃຫຍ່ນ້ອຍ

ສັດປ່າສູນຫາຍ
ເພື່ອຄົງໂຕໄດ້
ໝາພານຈອບໄລ່
ຄອຍຂ້າຈອບຍິງ

✳ ບົກະທິງວ່ານັ້ນ
ຊ່ວຍຊາຍຊູກຳລັງ
ເອົາປະສົມບອງເຫລົ້າ
ລືມຮອດຄວາມເດືອດຮ້ອນ

ມີຄ່າແພງຫລາຍ
ປຸກເສກທາດລົ້ມ
ມີພະລັງກິນຄື່ມ
ແຮງກ້າຄຶກຄະນອງ ວ່າຊັ້ນ !

✳ ບໍ່ຄຳນຶງບ່ອນເບື້ອງ
ພຽງແຕ່ຫາທາງ
ບໍ່ສົນນຳໄພຮ້າຍ
ຍ້ອນວ່າຕັດຕົ້ນໄມ້

ຜົນເຫດຊິຕາມມາ
ມັ່ງມີລວຍລົ້ນ
ຈະທຳລາຍອັນໃຫຍ່
ເຫັນໄດ້ແກ່ເງິນ

✳ ສັດປ່າຕາຍມອດມ້ວຍ
ມາປຸງເປັນອາຫານ
ແຖມເອົາໄປຂາຍຄ້າ
ສັດກໍຕາຍຮາບກ້ຽງ

ເພາະຄົນລ່າຍິງເອົາ
ແຊບນົວດີແທ້
ແລກເງິນຕາໃຊ້ຈ່າຍ
ສຽງຮ້ອງກໍບໍ່ມີ ສາແລ້ວ

✳ ເຮົາຄວນອານຸຮັກໄວ້
ຢ່າທຳລາຍສັດສາ
ຢ່າລ່ວງເກີນແດນກ້ຳ
ບໍ່ໄດ້ອີ່ງອວດອ້າງ

ໄມ້ໃຫຍ່ດົງໜາ
ປ່າພົງຜືນກວ້າງ
ຂຽນຄຳກອນວອນສິ່ງ
ວາງກ້າມໃສ່ໃຜ ທ່ານເອີຍ !




## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ບໍ່ຢູ່ໃນການດູແລ

ມີຄູ່ຜົວເມຍໜຶ່ງໄປທ່ຽວຢູ່ສະຖານທີ່ແຫ່ງໜຶ່ງ ແລ້ວເຂົ້າພັກໃນໂຮງແຮມ ຫຼັງຈາກນັ້ນ, ຜູ້ເປັນຜົວກໍໄດ້ໂທຫາເຄົາເຕີວ່າ:

**ຜົວ:** ກະລຸນາຂຶ້ນມາຫ້ອງຂ້ອຍໄວໆ ຂ້ອຍກຳລັງຜິດກັບເມຍ ແລະ ລາວກຳລັງຊິໂດດລົງປ່ອງຢ້ຽມ.

**ພະນັກງານ:** ຂໍໂທດເຈົ້າ! ເລື່ອງນີ້ພວກເຮົາບໍ່ສາມາດເຂົ້າໄປຫຍຸ້ງໄດ້.

**ຜົວ:** ປະຕິໂທ! ບໍ່ສາມາດຫຍຸ້ງໄດ້ຈັ່ງໃດ ປະຕູປ່ອງຢ້ຽມບໍ່ສາມາດເປີດໄດ້ ມັນຢູ່ໃນຄວາມດູແລຂອງພວກເຈົ້າບໍ່ແມ່ນບໍ່...

## ຄະຕິເຕືອນໃຈ

# ດອກຫຍ້າ

ຈົ່ງເປັນຄົນເວົ້າດີ ແຕ່ຢ່າດີແຕ່ເວົ້າ

ລັດຖະສະພາຕ່າງປະເທດ

# ສະມາຊິກລັດຖະສະພາຊຸດໃໝ່ ຂອງມານດິບ ເຂົ້າສາບານຕົນ

ສະມາຊິກ 93 ທ່ານ ທີ່ໄດ້ຮັບເລືອກຕັ້ງເປັນສະມາຊິກລັດຖະສະພາຊຸດທີ XX ໄດ້ເຂົ້າພິທີສາບານຕົນ ທີ່ຈັດຂຶ້ນຢູ່ລັດຖະສະພາໃນຕອນເຊົ້າວັນອັງຄານທີ 28 ພຶດສະພາ 2024; ນອກຈາກນີ້, ຍັງໄດ້ເລືອກຕັ້ງທ່ານ ອັບດຸນ ຣາຮີມ ອັບດຸນລາ (Abdul Raheem Abdulla) ເປັນປະທານລັດຖະສະພາຜູ້ໃໝ່ ແລະ ທ່ານ ອາເໝັດ ນາຊິມ (Ahmed Nazim) ເປັນຮອງປະທານລັດຖະສະພາຜູ້ໃໝ່.

ສາທາລະນະລັດມານດິບ ໄດ້ຈັດການເລືອກຕັ້ງສະມາຊິກລັດຖະສະພາ ເມື່ອວັນທີ 21 ເມສາຜ່ານມາ ເຊິ່ງພັກປະຊາຊົນ (People's National Congress-PNC) ໄດ້ຮັບໄຊຊະນະຢ່າງຫຼວງຫຼາຍ ໂດຍໄດ້ 75 ຈາກທັງໝົດ 93 ທີ່ນັ່ງ ແລະພັກປະຊາທິປະໄຕມານດິບ (Maldivian Democratic Party-MDP) ເຊິ່ງໄດ້ສຽງສ່ວນຫຼາຍໃນລັດຖະສະພາຊຸດທີ XIX ໄດ້ພຽງ 12 ທີ່ນັ່ງ.

**ແຫຼ່ງຂ່າວ: ຊິນຮວາ**



# ລັດຖະສະພາໂກໂລມບີ ຜ່ານກົດໝາຍ ຫ້າມກິລາຕໍ່ສູ້ກັບງົວກະທິງ



ເມື່ອວັນທີ 29 ພຶດສະພາຜ່ານມາ, ລັດຖະສະພາໂກໂລມບີ ໄດ້ຜ່ານຮ່າງກົດໝາຍຫ້າມກິລາຕໍ່ສູ້ກັບງົວກະທິງ (bullfighting) ຄວາມບັນເທີງທີ່ໄດ້ກາຍເປັນຫົວຂໍ້ຂອງການໂຕ້ຖຽງ ເຖິງແມ່ນວ່າມັນເປັນທີ່ນິຍົມໃນປະເທດອາເມລິກາໃຕ້ແຫ່ງນີ້ ເຊິ່ງມີຫຼາຍຮ້ອຍກິດຈະກຳ ແລະ ດຶງດູດຜູ້ຊົມຫຼາຍພັນຄົນໃນແຕ່ລະປີ.

ຖ້າຫາກວ່າກົດໝາຍດັ່ງກ່າວໄດ້ຮັບການລົງນາມຮັບຮອງໂດຍປະທານາທິບໍດີ ກຸສຕາໂວ ເປໂຕຣ (Gustavo Petro) ເຊິ່ງໃນອະດີດ ທ່ານເຄີຍສະໜັບສະໜູນຂໍ້ຈຳກັດກ່ຽວກັບກິລາຕໍ່ສູ້ກັບງົວກະທິງ, ຂໍ້ຫ້າມດັ່ງກ່າວຈະມີຜົນບັງຄັບໃຊ້ໃນປີ 2027.

ສະພາຜູ້ແທນປະຊາຊົນ (ສະພາຕໍ່າ) ໄດ້ລົງຄະແນນສຽງຢ່າງລົ້ນເຫຼືອ ເພື່ອອະນຸມັດຮ່າງກົດໝາຍດັ່ງກ່າວ ດ້ວຍຄະແນນ 93 ຕໍ່ 2 ສຽງ.

ກົດໝາຍຫ້າມກິລາຕໍ່ສູ້ກັບງົວກະທິງ ຈະເຮັດໃຫ້ສາທາລະນະລັດໂກໂລມບີ ປະຕິບັດຕາມປະເທດອື່ນໆໃນພາກພື້ນ ທີ່ໄດ້ສັ່ງຫ້າມກິລາຕໍ່ສູ້ກັບງົວກະທິງ ລວມມີ: ບຣາຊິນ, ຊິເລ, ອາກຊັງຕິນ, ອູຣູກວາຍ ແລະ ກົວເຕມາລາ.

ກ່ອນທີ່ກົດໝາຍຈະມີຜົນບັງຄັບໃຊ້ໃນປີ 2027, ລັດຖະບານໄດ້ສັນຍາວ່າຈະຊ່ວຍຊອກຫາທາງເລືອກໃນການຈ້າງງານສຳລັບປະຊາຊົນຫຼາຍສິບພັນຄົນ ທີ່ອີງໃສ່ກິລາຕໍ່ສູ້ກັບງົວກະທິງເພື່ອລາຍໄດ້ຂອງພວກເຂົາ ທັງທາງກົງ ແລະ ທາງອ້ອມ ລວມທັງປັບປຸງສະໜາມກິລາຕໍ່ສູ້ກັບງົວກະທິງຂອງປະເທດ ເພື່ອໃຫ້ເໝາະສົມກັບກິດຈະກຳກິລາ ແລະ ກິດຈະກຳວັດທະນະທຳອື່ນໆອີກດ້ວຍ.

ໃນປີ2018, ສານລັດຖະທຳມະນູນຂອງໂກໂລມບີ ໄດ້ຮັບຮູ້ກິລາຕໍ່ສູ້ກັບງົວກະທິງ ເປັນສ່ວນໜຶ່ງຂອງປະເພນີວັດທະນະທຳຂອງປະເທດ. ແຕ່ວ່ານັບຕັ້ງແຕ່ນັ້ນເປັນຕົ້ນມາ, ນະຄອນຫຼວງໂບໂກຕາ ເຊິ່ງເປັນໜຶ່ງໃນເມືອງກິລາຕໍ່ສູ້ກັບງົວກະທິງທີ່ເກົ່າແກ່ທີ່ສຸດໃນທະວີບອາເມລິກາ ໄດ້ອອກກົດໝາຍຫ້າມທຳຮ້າຍ ຫຼື ຂ້າງົວກະທິງ ໂດຍຫວັງວ່າຈະເຮັດໃຫ້ກິລານອງເລືອດດັ່ງກ່າວສິ້ນສຸດລົງ.

ຈົນກວ່າກົດໝາຍໃໝ່ຈະມີຜົນບັງຄັບໃຊ້, ໂກໂລມບີ ຍັງເປັນໜຶ່ງໃນ 8 ປະເທດທີ່ມີກິລາຕໍ່ສູ້ກັບງົວກະທິງ, ເຊິ່ງອີກ 7 ປະເທດແມ່ນ ເອກວາດໍ, ຝຣັ່ງ, ເມັກຊິກ, ເປຣູ, ປອກຕຸຍການ, ແອັດສະປາຍ ແລະ ເວເນຊູເອລາ.

**ແຫຼ່ງຂ່າວ: AFP**

# ສະພາໄຕ້ຫວັນ ຜ່ານກົດໝາຍເພີ່ມ ອຳນາດການກວດສອບໃຫ້ຝ່າຍນິຕິບັນຍັດ




ວັນອັງຄານທີ 29 ພຶດສະພາຜ່ານມາ, ສະພານິຕິບັນຍັດໄຕ້ຫວັນ ຫຼື ສະພາຢວນ (Legislative Yuan) ເຊິ່ງພັກກົກມິນຕັງ (Kuomintang - KMT) ພັກອະນຸຮັກນິຍົມເກົ່າແກ່ ມີສຽງຫຼາຍທີ່ສຸດ 52 ຈາກທັງໝົດ 113 ທີ່ນັ່ງ ຜ່ານກົດໝາຍເພີ່ມອຳນາດໃຫ້ແກ່ຝ່າຍນິຕິບັນຍັດ ໃນການກວດສອບການເຄື່ອນໄຫວວຽກງານຂອງຝ່າຍບໍລິຫານ ລວມເຖິງການທີ່ປະທານາບໍດີ ຕ້ອງຖະແຫຼງນະໂຍບາຍຕໍ່ສະພາ ແບບດຽວກັນກັບສະຫະລັດອາເມລິກາ ແລະ ການຕອບຄຳຊັກຖາມຂອງສະມາຊິກສະພາ ເຊິ່ງຈະເປັນຄັ້ງທຳອິດໃນປະຫວັດສາດຂອງໄຕ້ຫວັນ.

ໃນຂະນະດຽວກັນ, ກົດໝາຍດັ່ງກ່າວເຊິ່ງໄດ້ຮັບການສະໜັບສະໜູນຈາກພັກປະຊາຊົນໄຕ້ຫວັນ (Taiwan People's Party - TPP) ພັກການເມືອງນ້ອງໃໝ່ ເຊິ່ງມີ 8 ທີ່ນັ່ງໃນສະພາຢວນ ເພີ່ມອຳນາດໃຫ້ຝ່າຍນິຕິບັນຍັດໃນການສອບສວນທີ່ໝາຍເຖິງການຂໍໃຫ້ໜ່ວຍງານລັດ, ກອງທັບ, ບໍລິສັດ ແລະ ນິຕິບຸກຄົນ ໃຫ້ຂໍ້ມູນ ຫຼື ຂໍຄຳຊີ້ແຈງກ່ຽວກັບກໍລະນີໃດໜຶ່ງ; ຖ້າຝ່າຍທີ່ຖືກຮ້ອງຂໍ ບໍ່ໃຫ້ການຮ່ວມມື, ປົດບັງ ຫຼື ບິດເບືອນຂໍ້ມູນ ອາດຖືກປັບໃໝເປັນເງິນ 100,000 ໂດລາໄຕ້ຫວັນ (1 ໂດລາໄຕ້ຫວັນ ປະມານ 660 ກີບ).

ນອກຈາກນີ້, ທີ່ປະຊຸມຍັງໄດ້ຜ່ານກົດໝາຍ "ຫ້າມໝິ່ນປະໝາດສະພານິຕິບັນຍັດ" ທີ່ກຳນົດໂທດປັບໃໝເປັນເງິນສູງສຸດ 200,000 ໂດລາໄຕ້ຫວັນ.

ສະມາຊິກພັກປະຊາທິປະໄຕກ້າວໜ້າ (Democratic Progressive Party-DPP) ພັກລັດຖະບານ ເຊິ່ງມີ 51 ທີ່ນັ່ງໃນ ປະນາມການຜ່ານກົດໝາຍຄັ້ງນີ້ຢ່າງໜັກ; ເຖິງແນວໃດກໍຕາມ, ລັດຖະບານມີອຳນາດໃນການຂວ້ຳ (overturn) ກົດໝາຍ ສິ່ງໃຫ້ສະພາຢວນນຳໄປພິຈາລະນາຄືນໃໝ່.

**ແຫຼ່ງຂ່າວ: AFP**

# ພັກລັດຖະບານອາຟຣິກາໃຕ້ ສູນເສຍ ສຽງສ່ວນຫຼາຍ, ຕ້ອງການພັນທະມິດ


ໄຊຣິວ ຣາມາໂຟຊາ

ສະມັດຊາແຫ່ງຊາດອາຟຣິກາ ຫຼື ເອເອັນຊີ (African National Congress-ANC) ເຊິ່ງເປັນພັກລັດຖະບານຂອງສາທາລະນະລັດອາຟຣິກາໃຕ້ ຈຳເປັນຕ້ອງຊອກຫາພັນທະມິດ ເພື່ອຈັດຕັ້ງລັດຖະບານຊຸດໃໝ່ ຫຼັງຈາກສູນເສຍສຽງສ່ວນຫຼາຍໃນຮອບ 30 ປີ ໃນການເລືອກຕັ້ງທົ່ວໄປ ເຊິ່ງເປັນຈຸດປ່ຽນທາງການເມືອງ.

ພາຍຫຼັງການນັບຄະແນນແລ້ວ 99.85% ຈາກການເລືອກຕັ້ງທົ່ວໄປທີ່ຈັດຂຶ້ນເມື່ອວັນພຸດທີ 29 ພຶດສະພາຜ່ານມາ, ຜົນປາກົດວ່າ ພັກ ເອເອັນຊີ ຂອງປະທານາທິບໍດີ ໄຊຣິວ ຣາມາໂຟຊາ (Cyril Ramaphosa) ຜູ້ນຳອາຟຣິກາໃຕ້ ໄດ້ຮັບຄະແນນສຽງພຽງ 40% ເທົ່ານັ້ນ ເຊິ່ງຫຼຸດລົງຢ່າງຫຼວງຫຼາຍຈາກ 57.5% ທີ່ໄດ້ຮັບໄຊຊະນະໃນປີ 2019.

ຜົນການເລືອກຕັ້ງດັ່ງກ່າວ ຖືເປັນຈຸດປ່ຽນທາງປະຫວັດສາດຂອງອາຟຣິກາໃຕ້ ເນື່ອງຈາກວ່າພັກ ເອເອັນຊີ ໄດ້ຮັບສຽງສ່ວນຫຼາຍຢ່າງເດັດຂາດມາຕັ້ງແຕ່ປີ 1994 ເມື່ອຜູ້ນຳການປົດປ່ອຍ ເນວສັນ ແມນເດລາ (Nelson Mandela) ໄດ້ນຳພາປະເທດຊາດອອກຈາກການປົກຄອງຂອງຊົນເຜົ່າສ່ວນໜ້ອຍຜິວຂາວ ແລະ ເຂົ້າສູ່ລະບອບປະຊາທິປະໄຕ ຫຼື ນັບຕັ້ງແຕ່ສິ້ນສຸດຍຸກການແບ່ງແຍກຜິວພັນ.

ພັກ ເອເອັນຊີ ຈະຕ້ອງເຈລະຈາຈັດຕັ້ງລັດຖະບານປະສົມ ຫຼືຢ່າງໜ້ອຍກໍຊັກຊວນພັກການເມືອງອື່ນ ໃຫ້ສະໜັບສະໜູນ ຣາມາໂຟຊາ ໃນລັດຖະສະພາ ເພື່ອເຮັດໃຫ້ທ່ານສາມາດຈັດຕັ້ງລັດຖະບານສຽງສ່ວນໜ້ອຍ ໂດຍຕ້ອງອາໄສພັກອື່ນໆ ເພື່ອຜ່ານງົບປະມານ ແລະ ກົດໝາຍຕ່າງໆ.

**ແຫຼ່ງຂ່າວ: AFP**

ເຝົ້າເຫັນ ໄດ້ຍິນຄວາມ

❖ ວິເສດ ສະແຫວງສຶກສາ

# ກຽມໄວ້ລ່ວງໜ້າ ເພື່ອຮັບມືກັບສັງຄົມຜູ້ເຖົ້າ

ໃນບົດນີ້ ຂໍສະເໜີກ່ຽວກັບການກະກຽມຂອງທາງການປະເທດສິງກະໂປເພື່ອຮັບມືກັບສັງຄົມຜູ້ເຖົ້າ ໝາຍເຖິງສັງຄົມທີ່ມີການເພີ່ມຂຶ້ນຂອງພົນລະເມືອງອາຍຸສູງ (ແຕ່ 60 ປີຂຶ້ນໄປ) ແລະ ແຖມດ້ວຍເລື່ອງກ່ຽວກັບຄົນພິການ.

ສິງກະໂປ ແມ່ນປະເທດອຸດສາຫະກຳກ້າວໜ້າທັນສະໄໝໃນແຖວໜ້າຂອງໂລກປະເທດໜຶ່ງ ແຕ່ພ້ອມດຽວກັນ ກໍພວມກາຍເປັນບ່ອນຢູ່ອູ່ນອນຂອງບັນດາເສດຖີອາຍຸ (ພວກຜູ້ເຖົ້າອາຍຸຍືນ) ອາຍຸຍືນສະເລ່ຍຂອງຄົນສິງກະໂປໃນປັດຈຸບັນແມ່ນແຕ່ 85 ປີ ເຖິງ 100 ປີຂຶ້ນໄປ ຄອງອັນດັບທີ 1 ຂອງໂລກໄປແລ້ວ. ການທີ່ມີພົນລະເມືອງອາຍຸຍືນນັ້ນຖືເປັນໃບໜ້າ ແລະ ພາບພົດທີ່ດີຂອງປະເທດເພາະມັນສະແດງເຖິງການມີນະໂຍບາຍສະຫວັດດີການທີ່ດີ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ຄົນມີສຸຂະພາບດີ, ມີການບໍລິການທາງການແພດທີ່ດີ ແລະ ອື່ນໆ. ແຕ່ມາພ້ອມໆໃບໜ້າ ແລະ ພາບພົດທີ່ດີດັ່ງກ່າວ, ປະເທດທີ່ມີຄົນອາຍຸສູງເພີ່ມຂຶ້ນນັ້ນ ກໍປະເຊີນກັບນາໆບັນຫາເຊັ່ນ: ການຂາດແຮງງານ, ການແບກຫາບງົບປະມານດ້ານສະຫວັດດີການ ເຊັ່ນ: ຕ້ອງມີສູນປິ່ນປົວ, ບ້ານພັກພາອາໄສ ສະເພາະພວກຄົນເຖົ້າເປັນຕົ້ນ.

ເພື່ອຮັບມືກັບສັງຄົມຜູ້ເຖົ້າທີ່ມາໄວເກີນຄາດນັ້ນ, ທ່ານ ລີຊຽນລຸງ ນາຍົກລັດຖະມົນຕີ ສິງກະໂປ ຈຶ່ງໄດ້ປະກາດໃນປີ 2019 ກ່ຽວກັບແຜນການແກ້ໄຂບັນຫາການຂາດແຮງງານ ຍ້ອນຈຳນວນຜູ້ເຖົ້າເພີ່ມຂຶ້ນ ແຕ່ອັດຕາການເກີດພັດຫຼຸດລົງຊຸກໄຊ້ ຄືກຳນົດເອົາ 65 ປີ ເປັນອາຍຸບຳນານ ແທນ 62 ປີ ໃນເມື່ອກ່ອນ. ບໍ່ພຽງແຕ່ເທົ່ານັ້ນ, ທາງການຍັງມີນະໂຍບາຍຕໍ່ອາຍຸເຮັດວຽກຮອດ 70 ປີ. ໝາຍຄວາມວ່າ ຫຼັງບຳນານ (ເມື່ອອາຍຸຄົບ 65 ປີ) ແຮງງານທີ່ຍັງມີສຸຂະພາບດີ ແລະ ມີຄວາມສະໝັກໃຈ ກໍຍັງມີໂອກາດເຮັດວຽກຕື່ມຈົນຮອດອາຍຸ 70 ປີ. ໃນເມື່ອກ່ອນນັ້ນ ອາຍຸບຳນານແມ່ນ 62 ປີ ແລະ ມີສິດໄດ້ຮັບຈ້າງງານຕໍ່ອີກຮອດ 67 ປີ. ສ່ວນການກະກຽມດ້ານອື່ນໆນັ້ນ ກໍແມ່ນເລື່ອງງົບປະມານສຳລັບໃຊ້ຈ່າຍໃຫ້ບໍລິການດ້ານສະຫວັດດີການສັງຄົມ ແລະ ດ້ານສາທາລະນະສຸກ. ສິ່ງທີ່ຂາດບໍ່ໄດ້ ກໍຄືງົບປະມານເພື່ອເອື້ອອຳນວຍຄວາມສະດວກສະບາຍໃຫ້ແກ່ຄູ່ຜົວເມຍໃນການມີລູກ-ການເບິ່ງແຍງລ້ຽງດູລູກ ເພື່ອເພີ່ມອັດຕາການເກີດໃຫ້ຫຼາຍຂຶ້ນ. ໃນຊຸມປີເລີ່ມຕົ້ນຂອງນະໂຍບາຍຮັບມືກັບບັນຫາສັງຄົມຜູ້ເຖົ້ານັ້ນ, (2019-2021) ທາງການສິງກະໂປ ໄດ້ຕັ້ງງົບປະມານດ້ານສະຫວັດດີການສັງຄົມ ແລະ ສາທາລະນະສຸກ ສູງເຖິງ 6.1 ຕື້ໂດລາສິງກະໂປ (ເທົ່າກັບ 3 ພັນກວ່າຕື້ກີບ ຕາມອັດຕາແລກປ່ຽນໃນປີ 2019).

ເພື່ອສິດທິ ແລະ ຜົນປະໂຫຍດຂອງຄົນພິການໃນພາກພື້ນ

ເພື່ອຮັບປະກັນສິດທິ ແລະ ຜົນປະໂຫຍດ ຄົນພິການຄວນໄດ້ຮັບ ກໍຄືການມີສ່ວນຮ່ວມຂອງພວກເຂົາເຈົ້າໃນສັງຄົມ, ບັນດາປະເທດໃນພາກພື້ນອາຊີ-ປາຊີຟິກ ຄວນປະຕິບັດຫຼັກການສຳຄັນດັ່ງຕໍ່ໄປນີ້ຄື: 1. ຫັນເອົາເນື້ອໃນສົນທິສັນຍາວ່າດ້ວຍສິດທິຂອງຄົນພິການເຂົ້າໃນກົດໝາຍແຫ່ງຊາດທີ່ກ່ຽວຂ້ອງ; 2. ຊຸກຍູ້ຄົນພິການໃນທຸກເກນອາຍຸ ໃຫ້ມີສ່ວນຮ່ວມໃນການສ້າງແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; 3. ເອົາໃຈໃສ່ເຖິງຄວາມຕ້ອງການພິເສດຂອງຄົນພິການ; 4. ຊຸກຍູ້ກຳລັງແຮງຂອງພາກສ່ວນເອກະຊົນ ເຂົ້າໃນການພັດທະນາແບບເຊື່ອມໂຍງຂອງຄົນພິການ; 5. ສ້າງ ແລະ ປະຕິບັດ ບັນດານະໂຍບາຍກ່ຽວກັບຄົນພິການ ແລະ 6. ຮັດແຄບຊ່ອງວ່າງໃນບັນດາຂໍ້ມູນ ກ່ຽວກັບຄົນພິການ. ທັງ 6 ຫຼັກການທີ່ກ່າວມານີ້ ແມ່ນຜົນຂອງກອງປະຊຸມຄະນະກຳມະການເສດຖະກິດ-ສັງຄົມ ພາກພື້ນອາຊີ-ປາຊີຟິກ ຂອງອົງການສະຫະປະຊາຊາດ (ESCAP) ຈັດຂຶ້ນໃນທ້າຍເດືອນຕຸລາ 2022 ທີ່ຈາກາຕາ ອິນໂດເນເຊຍ ທີ່ມີ 53 ປະເທດເຂົ້າຮ່ວມລວມທັງຄະນະຜູ້ແທນຈາກສປປລາວ.

TE SOLE

ທະນາຄານພັດທະນາລາວ
LDB Bank




*# ບ່າວກະບື*

ທ່ານເຊີລອກໂຮມ ແລະ ດຣ.ວັດສັນ ຮ່ວມກັນເດີນທາງທ່ອງທ່ຽວ. ພວກເພິ່ນພາກັນກາງຕູບຜ້າເຕັນ. ຈາກນັ້ນກໍເຂົ້າບ່ອນນອນ, ຢຽດຄີງ ແລະ ແນມເບິ່ງທ້ອງຟ້າ.

ທ່ານໂຮມເວົ້າວ່າ: "ວັດສັນແນມຂຶ້ນທ້ອງຟ້າດູ...ເຈົ້າເຫັນຫຍັງແດ່?".

"ເອີ່... ກໍ່ເຫັນໝູ່ດາວເປັນພັນໆດວງຫັ້ນລະ?"

"ແລະ ນັ້ນມັນໝາຍວ່າແນວໃດສຳລັບເຈົ້າ?"

"ເອີ່ ເຮົາຄິດວ່າ... ມັນໝາຍວ່າ ມື້ອື່ນອາກາດຈະສົດໃສດີ. ສຳລັບໂຮມເດ ມັນໝາຍຄວາມວ່າແນວໃດ?"

"ສຳລັບຂ້ອຍ... ມັນໝາຍຄວາມວ່າ ມີໃຜຜູ້ໜຶ່ງມາລັກຜ້າເຕັນພວກເຮົາໄປແລ້ວ".

## What's Up Doc?

***# BAOKBU***

Sherlock Holmes and Dr Watson were on a camping trip. They had gone to bed and were lying there looking up at the sky.

Holmes said: "Watson, look up. What do You see?"

"Well, I see thousands of stars."

"And what does that mean to you?"

"Well, I imagine it means we will have another nice day tomorrow. What does it mean to you Holmes?"

"To me, it means someone has stolen our tent."

ຕາມພາສາ ກາຕູນ




● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຽງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກິກ ບຸດດາໄຊ